ຄວາມຮູ້ພື້ນຖານ
ກ່ຽວກັບຂໍ້ຜູກພັນນອກສັນຍາ

Supported by:

ໂດຍ ຄະນະຄົ້ນຄວ້າກົດໝາຍແພ່ງ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ຄະນະນິຕິສາດ ແລະລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2014

ຄວາມຮູ້ພື້ນຖານ
ກ່ຽວກັບຂໍ້ຜູກພັນນອກສັນຍາ

ໂດຍ ຄະນະຄົ້ນຄວ້າກົດໝາຍແພ່ງ

ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

JICA Project for Human Resource Development in the Legal Sector

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ຄະນະນິຕິສາດ ແລະລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2014

ຄະນະກວດແກ້

1. ທ່ານ ສຈ. ເກດ ກຽດຕິສັກ ກະຊວງຍຸຕິທຳ
2. ທ່ານ ຄຳພາ ແສງດາຣາ ສານປະຊາຊົນສູງສຸດ
3. ທ່ານ ຮສ ດຣ ສາຍຂອງ ສາຍນະສິນ ມະຫາວິທະຍາໄລແຫ່ງຊາດ
4. ທ່ານ ຮສ ວຽງວິໄລ ທ່ຽງຈັນໄຊ ຄະນະນິຕິສາດ ແລະ ລັດຖະສາດ (ມຊ)
5. ທ່ານ ເກດສະໜາ ພົມມະຈັນ ກະຊວງຍຸຕິທຳ

ຊ່ຽວຊານຜູ້ຊີ້ນຳ

ທ່ານ ໂອຊາມຸ ອີຊິໂອກະ (Mr. Osamu ISHIOKA) ໂຄງການກົດໝາຍໄຈກາ

ຄະນະຄົ້ນຄວ້າ ແລະ ຂຽນ

1. ທ່ານ ວິໄຊ ສີຫາປັນຍາ, ຄະນະນິຕິສາດ ແລະ ລັດຖະສາດ (ມຊ)
2. ທ່ານ ບົວລີ ເພັດມີໄຊ, ອົງການໄອຍະການປະຊາຊົນສູງສຸດ
3. ທ່ານ ນາງ ຄອນສະຫວັນ ສາວະລີ, ກະຊວງຍຸຕິທຳ
4. ທ່ານ ຈັນທະລີ ດວງວິໄລ, ສານປະຊາຊົນສູງສຸດ
5. ທ່ານ ນະລິງລິດ ນໍລະສິງ, ກະຊວງຍຸຕິທຳ
6. ທ່ານ ພູໄຊ ຈັນທະວົງ, ຄະນະນິຕິສາດ ແລະ ລັດຖະສາດ (ມຊ)
7. ທ່ານ ທອງຄຳ ລໍ່ຢ່າງ, ຄະນະນິຕິສາດ ແລະ ລັດຖະສາດ (ມຊ)
8. ທ່ານ ສີບຸນຊົມ ບຸນລົມ, ອົງການໄອຍະການປະຊາຊົນສູງສຸດ
9. ທ່ານ ນາງ ລັດສະໝີ ສີສະໝຸດ, ກະຊວງຍຸຕິທຳ
10. ທ່ານ ນາງ ຄຳໄຜ ໄຊຍະວົງ, ກະຊວງຍຸຕິທຳ
11. ທ່ານ ຄຳໄພ ໄຊຍະສຸກ, ສານປະຊາຊົນສູງສຸດ
12. ທ່ານ ແສງເພັດ ວົງໄຊ, ອົງການໄອຍະການປະຊາຊົນສູງສຸດ
13. ທ່ານ ນາງ ເຂັມແກ້ວ ເລື່ອນວິໄລ, ກະຊວງຍຸຕິທາ
14. ທ່ານ ສາຍທະນູ ອິນສົມພອນ, ວິທະຍາໄລກົດໝາຍ, ກະຊວງຍຸຕິທຳ
15. ທ່ານ ນາງ ທະນົງສິນ ຄຳສິງສະຫວັດ, ວິທະຍາໄລກົດໝາຍ, ກະຊວງຍຸຕິທຳ
16. ທ່ານ ເຫຼົ້າຄຳ ຄຳບຸດລາດຊະວົງ, ວິທະຍາໄລກົດໝາຍ, ກະຊວງຍຸຕິທຳ

ຄຳເຫັນ

ຕາງໜ້າຄະນະຊີ້ນຳໂຄງການ ຂໍສະແດງຄວາມຊົມເຊີຍ ຄະນະຄົ້ນຄວ້າຂຽນປຶ້ມທິດສະດີກົດໝາຍແພ່ງ ກ່ຽວກັບຫຼັກການ ທົ່ວໄປຂອງຂໍ້ຜູກພັນນອກສັນຍາ ຊຶ່ງຄະນະດັ່ງກ່າວໄດ້ໃຊ້ຄວາມພະຍາຍາມຮວບຮວມບັນດາຫຼັກການ ແລະ ທິດສະດີຂອງກົດໝາຍແພ່ງ ທີ່ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ ແລະ ຕ່າງປະເທດມາຂຽນ ແລະ ອະທິບາຍເພື່ອໃຫ້ຜູ້ນຳໃຊ້ເຂົ້າໃຈຢ່າງເປັນເອກະພາບ. ຄະນະຂຽນປຶ້ມເຫຼັ້ມນີ້ປະກອບດ້ວຍ ນັກວິຊາການກົດໝາຍລາວ ທີ່ມາຈາກຫຼາຍພາກສ່ວນ ເປັນຕົ້ນແມ່ນ ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາໄລກົດໝາຍຂອງກະຊວງຍຸຕິທຳ ໂດຍການຮ່ວມມື ຈາກກະຊວງຍຸຕິທຳຂອງຍີ່ປຸ່ນ ຜ່ານອົງການໄຈກາ (JICA) ຊຶ່ງໄດ້ສະໜອງທຶນຮອນ, ຜູ້ຊ່ຽວຊານ ແລະ ສາດສະດາຈານທາງດ້ານກົດໝາຍ ຫຼາຍທ່ານ ຈາກມະຫາວິທະຍາໄລກົດ ໝາຍຂອງປະເທດຍີ່ປຸ່ນ ເພື່ອຊ່ວຍແນະນຳໃນການອະທິບາຍເນື້ອໃນກົດໝາຍຂອງ ສປປ ລາວ ປຽບທຽບກັບກົດໝາຍແພ່ງຍີ່ປຸ່ນ ແລະ ກົດໝາຍແພ່ງຂອງປະເທດ ອື່ນໆ.

ປຶ້ມເຫຼັ້ມນີ້ ເປັນພຽງບາດກ້າວ ອັນພື້ນຖານ ຂອງການພັດທະນາ ລະບົບກົດໝາຍແພ່ງຂອງ ສປປ ລາວ ແລະ ເປັນຜົນງານຂອງນັກວິຊາການກົດໝາຍລາວ ທີ່ໄດ້ຂຽນ ແລະ ຮິບໂຮມທິດສະດີພື້ນຖານຂອງກົດໝາຍແພ່ງ ແລະ ຍົກເອົາຕົວຢ່າງໃນພາກປະຕິບັດຕົວຈິງທີ່ເກີດຂຶ້ນຢູ່ ສປປ ລາວ ມາປະກອບ ເພື່ອເຮັດໃຫ້ເນື້ອໃນຂອງປຶ້ມສົມບູນຂຶ້ນເລື້ອຍໆ ຊຶ່ງຈະເປັນຜົນປະໂຫຍດຢ່າງໃຫຍ່ຫຼວງທາງດ້ານວິຊາການ ສຳລັບການຮຽນ, ການສອນ ແລະ ການນຳໃຊ້ໃນພາກປະຕິບັດຕົວຈິງໃນໂຂງເຂດອົງການປົກປ້ອງກົດໝາຍ, ການຈັດຕັ້ງລັດ-ສັງຄົມ, ສະຖາບັນການສຶກສາ ໃຫ້ຖືກຕ້ອງຕາມເນື້ອໃນ ແລະ ຈຸດປະສົງຂອງກົດໝາຍ.

ໃນໂອກາດນີ້, ຂ້າພະເຈົ້າ ຕາງໜ້າຄະນະຂຽນປຶ້ມທິດສະດີກົດໝາຍແພ່ງ, ຕາງໜ້າປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຂອບໃຈມາຍັງປະຊາຊົນຍີ່ປຸ່ນ, ຜູ້ຊ່ຽວຊານຈາກຍີ່ປຸ່ນ, ສາດສະດາຈານກົດໝາຍ ແລະ ລັດຖະບານຍີ່ປຸ່ນໂດຍຜ່ານອົງການໄຈກາ (JICA) ທີ່ໄດ້ໃຫ້ການຊ່ວຍເຫຼືອທຶນຮອນ ແລະ ຄວາມຮູ້ດ້ານວິຊາການ ແກ່ນັກວິຊາການ ກົດໝາຍລາວ. ຫວັງຢ່າງຍິ່ງວ່າປຶ້ມເຫຼັ້ມນີ້ຈະເປັນມໍລະດົກອັນລ້ຳຄ່າທາງດ້ານວິຊາການ ເພື່ອປະກອບສ່ວນໃນການ

ພັດທະນາລັດ ສປປ ລາວ ໃຫ້ເປັນລັດແຫ່ງກົດໝາຍ ແລະ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ກ້າວຂຶ້ນທຽມທັນກັບບັນດາປະເທດທີ່ພັດທະນາແລ້ວ.

ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າຄິດວ່າການຂີດຂຽນບາງສ່ວນຂອງທີມງານຍ່ອມປາສະຈາກບໍ່ໄດ້ຂໍ້ຂາດຕົກບົກພ່ອງ ຖ້າທ່ານໃດໄດ້ອ່ານຫາກພົບເຫັນກະລຸນາຊ່ວຍຕຳນິຕິຊົມ ເພື່ອໃຫ້ຄະນະຂຽນປື້ມມີທິດທາງໃນການປັບປຸງໃຫ້ມີຄວາມສົມບູນຍິ່ງໆຂຶ້ນໃນອະນາຄົດ.

ຄະນະຊີ້ນຳໂຄງການ

ຮສ. ດຣ. ສາຍຂອງ ສາຍນາສິນ

ຄຳເຫັນ

ຂໍອວຍພອນໃຫ້ວຽກງານພັດທະນາ

ທິດສະດີກົດໝາຍແພ່ງຂອງລາວຈົ່ງກ້າວໜ້າຢ່າງບໍ່ຢຸດຢັ້ງ

ທ່ານ ສາດສະດາຈານ ມັດສຶໂອະ ຮິໂຮຊິ (ມະຫາວິທະຍາໄລ ເຄໂອ)
Professor Hiroshi Matsuo / Keio University Law School

ກ່ອນອື່ນໝົດ ຂ້າພະເຈົ້າ ກໍຂໍສະແດງຄວາມຍິນດີ ຕໍ່ຜົນສຳເລັດໃນການຈັດພິມ **"ຄວາມຮູ້ພື້ນຖານກ່ຽວກັບຂໍ້ຜູກພັນນອກສັນຍາ"** ພ້ອມກັບສະມາຊິກທີ່ເຂົ້າຮ່ວມໂຄງການທຸກໆທ່ານ. ຊຶ່ງແຕ່ລະທ່ານຜ່ານມາ ກໍໄດ້ເຂົ້າຮ່ວມການເຄື່ອນໄຫວຕ່າງໆເຊັ່ນ: ການສຳມະນານອກສະຖານທີ່, ກອງປະຊຸມສຳມະນາວິຊາການທີ່ວຽງຈັນ, ການສຳມະນາວິຊາການທີ່ຍີ່ປຸ່ນ, ລວມທັງການປະຊຸມທາງໄກ JICA-Net ແລະ ບັນດາທ່ານກໍໄດ້ເສຍສະຫຼະເວລາອັນມີຄ່າ ເຂົ້າສຸມໃສ່ວຽກງານຄົ້ນຄ້ວາ ຂຽນປຶ້ມຫົວນີ້ ສະນັ້ນ ຂ້າພະເຈົ້າກໍຂໍສະແດງຄວາມນັບຖື ແລະ ຂອບໃຈບັນດາທ່ານມານະທີ່ນີ້ດ້ວຍ. ສຳລັບປຶ້ມຄູ່ມືຫົວນີ້ມັນກໍແມ່ນຜົນງານຮ່ວມກັນ ຂອງບັນດານັກວິຊາການໃນຂົງເຂດຍຸຕິທຳຈາກ 4 ພາກສ່ວນກໍຄື ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ພ້ອມທັງຊ່ຽວຊານຜູ້ເຂົ້າຮ່ວມຈາກຍີ່ປຸ່ນ ຊຶ່ງກໍໄດ້ຮ່ວມກັນຄົ້ນຄ້ວາກົດໝາຍຂອງລາວ ບໍ່ວ່າຈະທາງດ້ານພາກທິດສະດີ ຫຼື ພາກປະຕິບັດ ລວມທັງມີການນຳໃຊ້ການວິເຄາະໂດຍສົມທຽບກົດໝາຍ, ໂດຍການຄົ້ນຄ້ວາລົງເລິກ ທີ່ມີການແລກປ່ຽນຄຳຄິດຄຳເຫັນນຳກັນຫຼາຍຫຼົບຫຼາຍຕ່າວ ຈົ່ງໄດ້ກາຍມາເປັນປຶ້ມຫົວນີ້ ຊຶ່ງກໍຖືວ່າ ເປັນສິ່ງທີ່ມີຄວາມໝາຍຢ່າງເລິກເຊິ່ງທີ່ສຸດ. ຕໍ່ກັບຕົວຂອງຂ້າພະເຈົ້າເອງແລ້ວ ຂ້າພະເຈົ້າ ກໍໄດ້ຮຽນຮູ້ຫຼາຍສິ່ງຫຼາຍຢ່າງຈາກບັນດາທ່ານເຊັ່ນດຽວກັນ ແລະ ມັນກໍເປັນຄວາມຊົງຈຳອັນລ້ຳຄ່າ ທີ່ລືມບໍ່ໄດ້.

ສຳລັບປຶ້ມຄູ່ມືຫົວນີ້ ແມ່ນໄດ້ມີການນຳໃຊ້ຕົວຢ່າງຂອງຂໍ້ຂັດແຍ່ງຕ່າງໆ, ໝູນໃຊ້ເຂົ້າໃນການອະທິບາຍບັນດາຈຸດປະສົງ ແລະ ບັນດາຫຼັກມູນທີ່ເປັນທີ່ມາຂອງມາດຕາກົດໝາຍທີ່ກ່ຽວຂ້ອງ ເປົ້າໝາຍກໍແມ່ນເພື່ອແນ່ໃສ່ຂຽນແນວໃດໃຫ້ຜູ້ອ່ານເຂົ້າໃຈງ່າຍທີ່ສຸດ. ສຳລັບການຂຽນປຶ້ມຄູ່ມືກ່ຽວກັບກົດໝາຍແພ່ງນັ້ນເຖິງວ່າ ມັນຈະເປັນວຽກງານທີ່ໜັກໜ່ວງທີ່ສຸດອັນໜຶ່ງກໍຕາມ ແຕ່ຄະນະຄົ້ນຄ້ວາກໍສາມາດຍາດໄດ້ຜົນສຳເລັດໃນການຂຽນ ແລະ ຈັດພິມຫຼາຍຜົນງານເຊັ່ນ: **"ຄຳຖາມ-ຕອບກົດໝາຍແພ່ງ" "ຄວາມຮູ້ພື້ນຖານກ່ຽວກັບຂໍ້ຜູກພັນໃນສັນຍາ"** ຊຶ່ງສິ່ງດັ່ງກ່າວມັນໄດ້ສະແດງອອກ ເຖິງເອກະລັກຂອງນິຕິສາດວິທະຍາໃນຮູບແບບຂອງລາວ (The Laotian Jurisprudence) ເຊື່ອແນ່ວ່າມັນຈະກາຍເປັນພື້ນຖານອັນດີໃຫ້ແກ່ການພັດທະນາ ປະມວນກົດໝາຍແພ່ງຂອງລາວໃນອະນາຄົດ. ຂ້າພະເຈົ້າຫວັງວ່າໃນຕໍ່ໜ້າ ປຶ້ມຄູ່ມືນີ້ຈະຖືກນຳໃຊ້ຢ່າງກ້ວາງຂວາງໃນຫຼາຍວາລະໂອກາດ, ກໍຄືການນຳໃຊ້ເຂົ້າໃນວຽກງານເຜີຍແຜ່ຄວາມຮູ້ ແລະ ວິທີຄິດກ່ຽວກັບກົດໝາຍແພ່ງ ໃຫ້ເຂົ້າເຖິງທົ່ວທຸກຂົງເຂດ ພ້ອມທັງນຳເອົາຜົນຕອບຮັບ ຈາກແຕ່ລະພາກ ສ່ວນນັ້ນ ມາປັບປຸງໃນການຈັດພິມ ຄັ້ງທີ2, ຄັ້ງທີ3 ແລະ ຕໍ່ໆໄປ ຄວບຄູ່ໄປກັບການຜັນຂະຫຍາຍຂອບເຂດການອະທິບາຍບັນຫາ ໃຫ້ກວມລວມຫຼາຍບັນຫາຂຶ້ນຕື່ມອີກ ໃນອະນາຄົດ.

ເຖິງແມ່ນວ່າພວກເຮົາຫາກໍເລີ່ມຕົ້ນບາດກ້າວທຳອິດ ບົນເສັ້ນທາງທີ່ຍາວໄກຂອງວຽກງານການຂຽນ ແລະ ປັບປຸງປຶ້ມຕຳລາຮຽນກໍຕາມ, ແຕ່ກໍຖືວ່າບາດກ້າວອັນນີ້ ເປັນບາດກ້າວທີ່ສຳຄັນອີກບາດກ້າວໜຶ່ງ ທີ່ຈະພາໃຫ້ພວກເຮົາກ້າວເດີນໄປທາງໜ້າໃນບາດກ້າວຕໍ່ໆໄປ. ການທີ່ຂ້າພະເຈົ້າໄດ້ມີໂອກາດເຂົ້າຮ່ວມວຽກງານນີ້ກັບບັນດາທ່ານ ກໍຖືວ່າເປັນສິ່ງທີ່ຂ້າພະເຈົ້າພາກພູມໃຈ ແລະ ກໍດີໃຈເປັນທີ່ສຸດ. ອີກເທື່ອໜຶ່ງຂ້າພະເຈົ້າຂໍສະແດງຄວາມນັບຖື ແລະ ຂອບໃຈເປັນຢ່າງສູງ ຕໍ່ຫົວໜ້າກຸ່ມຂຽນປຶ້ມຫົວນີ້ກໍຄື ທ່ານ ອາຈານ ວິໄຊ ຈາກ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ, ສະມາຊິກກຸ່ມທຸກທ່ານ, ທ່ານ ສາດສະດາຈານ ໂນະ ຊາວາ ມາຊາມິຈິ, ຊ່ຽວຊານປະຈຳໂຄງການ ທ່ານ ອິຊິໂອກະ ໂອຊາມຸ, ທ່ານ ນາກາມຸຣະ ເຄນອິຈິ, ທ່ານ ຄາວາມຸຣະ ຮິໂຕຊິ ແລະ ທຸກໆທ່ານທີ່ເຂົ້າຮ່ວມໃນວຽກງານຂອງໂຄງການນີ້, ສຸດທ້າຍນີ້ ຂ້າພະເຈົ້າກໍຂໍອວຍໄຊໃຫ້ພອນ ໃຫ້ວຽກງານການພັດທະນາທິດສະດີກົດໝາຍແພ່ງຂອງລາວຈົ່ງກ້າວໜ້າຢ່າງບໍ່ຢຸດຢັ້ງ.

ວັນທີ 31 ເດືອນ 5 ປີ 2014

ຄຳເຫັນ

ຄຳເຫັນກ່ຽວກັບ ປຶ້ມຄວາມຮູ້ພື້ນຖານ ກ່ຽວກັບຂໍ້ຜູກພັນນອກສັນຍາ

ທ່ານ ສາດສະດາຈານ ໂນະຊາວາ ມາຊາມິຈິ
Professor Masamichi NOZAWA /Rikkyo University

ຂໍສະແດງຄວາມຍິນດີ ໃນວາລະທີ່ **ປຶ້ມ "ຄວາມຮູ້ພື້ນຖານ ກ່ຽວກັບຂໍ້ຜູກພັນນອກສັນຍາ"** ໄດ້ຮັບການຈັດພິມ. ສືບຕໍ່ຈາກຄວາມປີຕິຍິນດີ ຕໍ່ຜົນສຳເລັດຂອງການຈັດພິມ **ປຶ້ມ "ຄວາມຮູ້ພື້ນຖານ ກ່ຽວກັບຂໍ້ຜູກພັນໃນສັນຍາ"** ທີ່ຜ່ານມາ ຂ້າພະເຈົ້າ ກໍຂໍຖືໂອກາດນີ້ສະແດງຄວາມນັບຖືຊົມເຊີຍ ຕໍ່ຄວາມອຸສາຫະພະຍາຍາມ ຂອງທຸກໆທ່ານອີກຄັ້ງໜຶ່ງ.

ສຳລັບເນື້ອໃນຂອງປຶ້ມຫົວນີ້ ແມ່ນໄດ້ເວົ້າກ່ຽວກັບບັນຫາ, ການເຮັດວຽກງານແທນຜູ້ອື່ນ, ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ, ການລະເມີດ ຊຶ່ງເລົ່ານີ້ລ້ວນແລ້ວແຕ່ແມ່ນ ຂໍ້ຜູກພັນທີ່ເກີດຂຶ້ນນອກເໜືອສັນຍາ ລະຫວ່າງຄູ່ກໍລະນີ ແລະ ໃນນັ້ນ ເມື່ອເວົ້າເຖິງການລະເມີດແລ້ວ ມັນໄດ້ກ່ຽວພັນ ແລະໄດ້ນຳໃຊ້ໂດຍກົງ ບັນດາຂໍ້ກຳນົດກົດໝາຍຕ່າງໆທີ່ໃກ້ຄົວເຮົາເຊັ່ນ ກໍລະນີອຸບັດຕິເຫດຕາມທາງຫຼວງ, ມົນລະພິດທາງນ້ຳ, ທາງອາກາດ ແລະ ມົນລະພິດທາງສຽງຕ່າງໆເປັນຕົ້ນ ທີ່ຖືວ່າເປັນຂົງເຂດທີ່ສຳຄັນຫຼາຍອີກຂົງເຂດໜຶ່ງ. ຢູ່ໃນກົດໝາຍວ່າດ້ວຍ ຂໍ້ຜູກພັນນອກສັນຍາ ຂອງລາວສະບັບປະຈຸບັນນັ້ນ ແມ່ນຈະມີລັກສະນະກະທັດຮັດ ແລະ ບໍ່ສັບສົນ, ແຕ່ວ່າເນື້ອໃນຂອງປຶ້ມຄູ່ມືຫົວນີ້ ແມ່ນຄະນະຜູ້ຂຽນ ເພີ່ນໄດ້ອະທິບາຍລົງເລິກ ກົດໝາຍດັ່ງກ່າວດ້ວຍການນຳໃຊ້ວິທີການ ວິເຄາະລະບົບໂຄງສ້າງ ແລະ ວິທີການວິເຄາະແບບສົມທຽບຄວບຄູ່ກັນໄປນຳ. ອັນນັ້ນກໍເພື່ອເຮັດໃຫ້ພວກເຮົາສາມາດມະໂນພາບເຫັນເຖິງຄວາມຮຽກຮ້ອງຕ້ອງການໃນອະນາຄົດຕໍ່ກັບວຽກງານປັບປຸງລະບົບກົດໝາຍຂອງລາວເຮົາໄປພ້ອມ.

ອີກເທື່ອໜຶ່ງ, ຂ້າພະເຈົ້າກໍຂໍສະແດງຄວາມນັບຖື ຕໍ່ຄວາມບາກບັ່ນ ພະຍາຍາມ ຂອງຄະນະຜູ້ຂຽນປຶ້ມ ເຖິງວ່າແຕ່ລະທ່ານຈະມີໜ້າວຽກປະຈຳຂອງຕົນຫຼາຍຢູ່ແລ້ວກໍຕາມ. ສຸດທ້າຍນີ້ ຂ້າພະເຈົ້າກໍຂໍອວຍພອນໃຫ້ຜົນງານຂອງບັນດາທ່ານທັງໝົດ ກໍຄື ປຶ້ມຄູ່ມື ຄຳຖາມ-ຕອບ ກົດໝາຍແພ່ງ, ປຶ້ມຄວາມຮູ້ພື້ນຖານ ກ່ຽວກັບຂໍ້ຜູກພັນໃນສັນຍາ ແລະ ປຶ້ມຄວາມຮູ້ພື້ນຖານກ່ຽວກັບຂໍ້ຜູກພັນນອກສັນຍາ ຫົວນີ້, ຈົ່ງເປັນທີ່ນິຍົມຊົມຊອບ ແລະ ສ້າງຄຸນປະໂຫຍດສູງສຸດໃຫ້ສັງຄົມລາວ ໃນປະຈຸບັນກໍຄືອະນາຄົດ.

ສາລະບານ

ຄຳເຫັນ..... ii

ຄຳເຫັນຂອງອາຈານ ແລະ ຊ່ຽວຊານຍີ່ປຸ່ນ..... iv

1. ຄວາມໝາຍຂອງຂໍ້ຜູກພັນນອກສັນຍາ..... 1

2. ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນເອງ, ຂອງບຸກຄົນອື່ນ, ຂອງສັດ ແລະ ຂອງວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນ..... 2

2.1. ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນເອງ..... 2

2.1.1. ຄວາມໝາຍ..... 2

2.1.2. ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບທາງແພ່ງ.....3

2.1.2.1. ການກະທຳທີ່ລະເມີດກົດໝາຍ..... 3

2.1.2.2. ຄວາມເສັຍຫາຍ..... 3

2.1.2.3. ສາຍພົວພັນລະຫວ່າງ ເຫດ ແລະ ຜົນເສັຍຫາຍ..... 4

2.1.2.4. ຄວາມຜິດໂດຍເຈດຕະນາ ແລະ ດ້ວຍຄວາມບໍ່ລະມັດລະວັງ..... 5

2.1.3. ຄວາມເສັຍຫາຍທີ່ເນື່ອງມາຈາກການນຳໃຊ້ສິດເກີນຄວນ..... 6

2.1.4. ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເນື່ອງມາຈາກສະພາວະທີ່ຈຳເປັນ..... 6

2.1.5. ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ຫຼາຍຄົນກ່ຳຂຶ້ນ..... 7

2.1.6. ການໃຊ້ແທນ, ການຄິດໄລ່ຄ່າເສັຍຫາຍ ແລະ ຄ່າປ່ວຍການ..... 7

2.2. ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງບຸກຄົນອື່ນ..... 11

2.2.1. ຄວາມໝາຍ.....11

2.2.2. ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ ແລະ ຜູ້ຮັບໃຊ້ວຽກ..... 12

2.2.3. ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ ແລະ ຜູ້ຄຸ້ມຄອງ..... 13

2.2.3.1. ຄວາມຮັບຜິດຊອບຂອງພໍ່ແມ່..... 13

2.2.3.2. ຄວາມຮັບຜິດຊອບຂອງຜູ້ປົກຄອງ..... 14

2.2.3.3. ຄວາມຮັບຜິດຊອບຂອງຜູ້ຄຸ້ມຄອງ..... 14

2.3. ຄວາມຮັບຜິດຊອບທີ່ເນື່ອງມາຈາກສັດ..... 15

2.3.1. ຄວາມໝາຍ..... 15

2.3.2. ເຈົ້າຂອງ ຫຼື ຜູ້ຄຸ້ມຄອງສັດ..... 15
2.3.3. ຄວາມເສັຍຫາຍທີ່ເກີດຂຶ້ນຈາກສັດ..... 15
2.3.4. ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງສັດ..... 15
2.4. ຄວາມຮັບຜິດຊອບທີ່ເນື່ອງມາຈາກວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນ..... 16
2.4.1. ຄວາມໝາຍ..... 16
2.4.2. ເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ..... 16
2.4.3. ຄວາມເສັຍຫາຍທີ່ເກີດຈາກວັດຖຸສິ່ງຂອງ..... 17
2.4.4. ຄວາມຮັບຜິດຊອບຂອງເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ..... 17
3. ການເຮັດວຽກງານແທນຜູ້ອື່ນ 18
3.1. ຄວາມໝາຍຂອງການເຮັດວຽກງານແທນຜູ້ອື່ນ..... 18
3.2. ເງື່ອນໄຂຂອງການເຮັດວຽກງານແທນຜູ້ອື່ນ..... 18
3.2.1. ການເຮັດວຽກງານຂອງຜູ້ອື່ນ 18
3.2.2. ການບໍ່ໄດ້ຮັບມອບໝາຍ..... 19
3.2.3. ເຈດຕະນາດີໃນການເຮັດວຽກງານແທນຜູ້ອື່ນ..... 19
3.2.4. ເພື່ອຜົນປະໂຫຍດຂອງຜູ້ອື່ນ..... 19
3.3. ຜົນຂອງການເຮັດວຽກງານແທນຜູ້ອື່ນ..... 20
3.3.1. ຜົນສຳລັບຜູ້ເຮັດວຽກງານແທນຜູ້ອື່ນ..... 20
3.3.1.1. ພັນທະໃນການສືບຕໍ່ປະຕິບັດວຽກງານແທນຜູ້ອື່ນ..... 20
3.3.1.2. ພັນທະໃນການສົ່ງມອບວຽກງານ, ຊັບສິ່ງຂອງ ຫຼື ເອກະສານ..... 20
3.3.1.3. ພັນທະໃນການລາຍງານ..... 20
3.3.1.4. ພັນທະໃນການໃຊ້ແທນຄ່າເສັຍຫາຍ..... 20
3.3.2. ຜົນສຳລັບຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ..... 20
3.3.2.1. ພັນທະຮັບເອົາຜົນປະໂຫຍດ..... 20
3.3.2.2. ພັນທະຫັດແທນຄ່າໃຊ້ຈ່າຍ..... 21
3.4. ການສິ້ນສຸດການເຮັດວຽກແທນຜູ້ອື່ນ..... 21
4. ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ..... 21

4.1. ຄວາມໝາຍຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ..... 21
4.2. ເງື່ອນໄຂຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ……..... 22
4.2.1. ຜູ້ໄດ້ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ..... 22
4.2.2. ໂດຍບໍ່ມີພື້ນຖານຖືກຕ້ອງ..... 22
4.2.3. ຜູ້ສູນເສຍຊັບສິ່ງຂອງ ຫຼື ຜົນປະໂຫຍດ……..... 23
4.2.4. ສາຍພົວພັນຂອງການໄດ້ ແລະ ການເສັຍ..... 23
4.3. ຜົນການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ……..... 24
4.3.1. ຜົນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ ໂດຍເຈດຕະນາ..... 24
4.3.2. ຜົນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດ……..... 25
4.3.3. ຜົນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດຈາກສັນຍາເປັນໂມຄະ ຫຼື ການຍົກ
ເລີກສັນຍາ……..... 25

ຄວາມຮູ້ພື້ນຖານກ່ຽວກັບຂໍ້ຜູກພັນນອກສັນຍາ

1. ຄວາມໝາຍຂອງຂໍ້ຜູກພັນນອກສັນຍາ

ຂໍ້ຜູກພັນນອກສັນຍາ ແມ່ນສາຍພົວພັນທາງດ້ານກົດໝາຍ ທີ່ເກີດຂຶ້ນໂດຍບໍ່ມີສັນຍານຳກັນ ຫຼື ຈາກການກະທຳຂອງບຸກຄົນໃດໜຶ່ງ, ຂອງບຸກຄົນອື່ນ, ຂອງສັດ ຫຼື ຈາກວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງບຸກຄົນນັ້ນ[1].

ຈາກຄວາມໝາຍຂ້າງເທິງ ຂໍ້ຜູກພັນນອກສັນຍາ ເກີດຈາກການກະທຳທີ່ລະເມີດກົດໝາຍ ຊຶ່ງຜູ້ເຂົ້າຮ່ວມບໍ່ໄດ້ຕົກລົງກັນມາກ່ອນ ເມື່ອມີຄວາມເສັຍຫາຍຕໍ່ຊີວິດ, ສຸຂະພາບ, ຈິດໃຈ ຫຼື ຊັບສິ່ງຂອງ ຂອງບຸກຄົນອື່ນ ຈຶ່ງພາໃຫ້ເກີດສິດຮຽກຮ້ອງ ແລະ ມີພັນທະໃນການໃຊ້ແທນ, ທົດແທນ, ສິ່ງໝາກຜົນ. ພ້ອມກັນນັ້ນ ຍັງມີຄວາມຮັບຜິດຊອບຕໍ່ການກະທຳຂອງບຸກຄົນອື່ນ, ສັດ ຫຼື ຊັບສິ່ງຂອງທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

ນອກຈາກນີ້ ຂໍ້ຜູກພັນນອກສັນຍາຍັງໄດ້ກຳນົດກ່ຽວກັບການເຮັດວຽກແທນຜູ້ອື່ນໂດຍບໍ່ໄດ້ຮັບມອບໝາຍ ແລະ ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ ຊຶ່ງພາໃຫ້ເກີດສິດຮຽກຮ້ອງ ແລະ ມີພັນທະໃນການສົ່ງຊັບສິ່ງຂອງ, ສິ່ງໝາກຜົນ ຫຼື ສືບຕໍ່ວຽກງານແທນ.

ເມື່ອສັງເກດແລ້ວເຫັນວ່າ ຂໍ້ຜູກພັນນອກສັນຍາ ແມ່ນແຕກຕ່າງຈາກຂໍ້ຜູກພັນໃນສັນຍາ ເນື່ອງຈາກວ່າຂໍ້ຜູກພັນນອກສັນຍານີ້ ຄູ່ສັນຍາບໍ່ໄດ້ມີຂໍ້ຜູກພັນກັນມາກ່ອນ ຫຼື ບໍ່ໄດ້ຕົກລົງເຮັດສັນຍາກັນມາກ່ອນ ແຕ່ມີການລະເມີດກົດໝາຍຂອງບຸກຄົນໃດໜຶ່ງ ເຮັດໃຫ້ອີກບຸກຄົນໜຶ່ງເກີດຄວາມເສັຍຫາຍ ສຳລັບຂໍ້ຜູກພັນໃນສັນຍາ ແມ່ນຄູ່ສັນຍາໄດ້ມີຂໍ້ຜູກພັນ ຫຼື ໄດ້ຕົກລົງກັນເຮັດສັນຍາມາກ່ອນ ຊຶ່ງພາໃຫ້ເກີດມີສິດ ແລະ ພັນທະທີ່ຕ້ອງໄດ້ປະຕິບັດຕໍ່ກັນ, ສະນັ້ນຖ້າຄູ່ສັນຍາຝ່າຍໃດໜຶ່ງຫາກລະເມີດຂໍ້ຜູກພັນ ກໍຈະມີຄວາມຮັບຜິດຊອບໃນການໃຊ້ແທນຄ່າເສັຍຫາຍຄືກັນກັບຂໍ້ຜູກພັນນອກສັນຍາ. ໃນການໃຊ້ແທນຄ່າເສັຍຫາຍສຳລັບຂໍ້ຜູກພັນໃນສັນຍາຈະມີລັກສະນະແຄບກວ່າ ຍ້ອນມີພຽງຄວາມຮັບຜິດຊອບຕໍ່ຄູ່ສັນຍາເທົ່ານັ້ນ, ສ່ວນຄວາມຮັບຜິດຊອບຕາມຂໍ້ຜູກພັນນອກສັນຍາສາມາດເກີດຂຶ້ນຕໍ່ບຸກຄົນທີສາມ.

ໂດຍລວມແລ້ວ ຂໍ້ຜູກພັນນອກສັນຍາ ເກີດຂຶ້ນຢູ່ໃນກໍລະນີ ດັ່ງນີ້:

1. ການກະທຳທີ່ລະເມີດກົດໝາຍ;

   - ການກະທຳຂອງຕົນເອງ;

---

[1] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 2 ວັກ 2

- ການກະທຳຂອງບຸກຄົນອື່ນ, ຂອງສັດ, ວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງ ຂອງຕົນ.

2. ການເຮັດວຽກແທນຜູ້ອື່ນ;
3. ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ.

2. ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນເອງ, ຂອງບຸກຄົນອື່ນ, ຂອງສັດ ແລະ ຂອງວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນ

2.1. ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນເອງ

2.1.1. ຄວາມໝາຍ

ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງຕົນເອງ ໝາຍເຖິງບຸກຄົນໃດໜຶ່ງຫາກໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ດ້ວຍການກະທຳຂອງຕົນເອງ ບຸກຄົນນັ້ນຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ ເວັ້ນເສັຍແຕ່ຄວາມເສັຍຫາຍທີ່ເກີດຂຶ້ນນັ້ນ ຫາກບໍ່ແມ່ນຍ້ອນຄວາມຜິດຂອງຕົນ, ການປ້ອງກັນຕົວ, ການປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ຫຼື ຍ້ອນຄວາມຜິດຂອງຜູ້ຖືກເສັຍຫາຍເອງ[2].

ການປ້ອງກັນຕົວ ໝາຍເຖິງການກະທຳຂອງບຸກຄົນໃດໜຶ່ງ ເພື່ອປົກປ້ອງຜົນປະ�โຫຍດຂອງລັດ ຫຼື ຂອງສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະโຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ ເພື່ອຕ້ານການບຸກລຸກທີ່ເປັນອັນຕະລາຍຕໍ່ສັງຄົມ, ບຸກຄົນອື່ນ ແລະ ຕົນເອງ[3]. ຈະຖືວ່າເປັນການປ້ອງກັນຕົວ ທີ່ບໍ່ມີຄວາມຮັບຜິດຊອບຕໍ່ຄ່າເສັຍຫາຍຕ້ອງມີເງື່ອນໄຂ ດັ່ງນີ້:

- ຕ້ອງມີການບຸກລຸກ
- ຕ້ອງຕອບโต້ໃນເວລານັ້ນ ແລະ ສົມຄວນແກ່ເຫດ;
- ຕ້ອງເຮັດຂຶ້ນ ເພື່ອໃຫ້ພົ້ນຈາກໄພອັນຕະລາຍ ທີ່ເກີດຂຶ້ນ;
- ເຄື່ອງມືທີ່ນຳໃຊ້ ຕ້ອງມີລັກສະນະສົມເຫດສົມຜົນ.

ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍ ທີ່ເກີດຈາກການປ້ອງກັນຕົວ ແລະ ສະພາວະທີ່ຈຳເປັນມີຄວາມແຕກຕ່າງກັນຄື ການກະທຳທີ່ເປັນການປ້ອງກັນຕົວ ຫາກເກີດຄວາມເສັຍຫາຍ ຜູ້ປ້ອງກັນຕົວຈະບໍ່ມີຄວາມຮັບຜິດຊອບທາງແພ່ງ ຍົກເວັ້ນການປ້ອງກັນຕົວເກີນຂອບເຂດ. ຄວາມເສັຍຫາຍທີ່ເກີດຈາກການກະທຳຍ້ອນສະພາວະທີ່ຈຳເປັນ ຜູ້ກໍ່ຄວາມເສັຍຫາຍ ຫຼື ຜູ້ໄດ້ຮັບຜົນປະโຫຍດຈະໄດ້ຮັບຜິດຊອບທາງແພ່ງ.

---

[2] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງປີ 2008, ມາດຕາ 83.

[3] ກົດໝາຍອາຍາ ປີ 2005, ມາດຕາ 20.

ການປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ໝາຍເຖິງການເຄື່ອນໄຫວວຽກງານໃນຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ຮັບການມອບໝາຍ ທີ່ຖືກຕ້ອງຕາມຫຼັກວິຊາການ ແລະ ຫຼັກຈັນຍາບັນ[4] ເຊັ່ນ ແພດຜ່າຕັດຄົນເຈັບ, ການເຮັດວຽກຕາມຄຳສັ່ງ...ແຕ່ການປະຕິບັດໜ້າທີ່ດັ່ງກ່າວນັ້ນ ຕ້ອງປະຕິບັດຕາມຫຼັກການວິຊາການ ແລະ ຄຳສັ່ງທີ່ຖືກຕ້ອງຕາມກົດໝາຍ.

2.1.2. ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບທາງແພ່ງ

ຕາມຫຼັກການແລ້ວ ບຸກຄົນ ຫຼື ນິຕິບຸກຄົນ ຈະມີຄວາມຮັບຜິດຊອບທາງແພ່ງ ກໍຕໍ່ເມື່ອບຸກຄົນ ຫຼື ນິຕິບຸກຄົນດັ່ງກ່າວ ຫາກມີການກະທຳທີ່ລະເມີດລະບຽບກົດໝາຍ ຊຶ່ງເປັນສາເຫດໃຫ້ເກີດມີຄວາມເສັຍຫາຍໃຫ້ແກ່ລັດ ຫຼື ສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນອື່ນ.

ບຸກຄົນ ຫຼື ນິຕິບຸກຄົນ ຈະມີຄວາມຮັບຜິດຊອບທາງແພ່ງດ້ວຍຕົນເອງ ກໍຕໍ່ເມື່ອມີການກະທຳທີ່ຄົບເງື່ອນໄຂ ດັ່ງນີ້ ການກະທຳທີ່ລະເມີດກົດໝາຍ, ຄວາມເສັຍຫາຍ, ສາຍພົວພັນເຫດ ແລະ ຜົນລະຫว่ວ່ າງຄວາມເສັຍຫາຍຕໍ່ການລະເມີດກົດໝາຍ ແລະ ຄວາມຜິດ[5]. ຍົກເວັ້ນການກະທຳຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຈະແມ່ນພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງເປັນຜູ້ຮັບຜິດຊອບແທນ.

2.1.2.1. ການກະທຳທີ່ລະເມີດກົດໝາຍ

ການກະທຳທີ່ລະເມີດກົດໝາຍ ໝາຍເຖິງການກະທຳ ຫຼື ການເນີນເສີຍທີ່ຂັດກັບກົດໝາຍ ຊຶ່ງໄດ້ສ້າງຄວາມເສັຍຫາຍຕໍ່ຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ຊຶ່ງລວມເຖິງຊີວິດ, ສຸຂະພາບ, ກຽດສັກສີ, ຈິດໃຈ ເຊັ່ນ **ກ** ຂັບລົດລ່ວງໄຟແດງແລ້ວໄປຕຳເອົາລົດ **ຂ** ເຮັດໃຫ້ **ຂ** ໄດ້ຮັບບາດເຈັບ ແລະ ລົດຂອງ **ຂ** ໄດ້ຮັບການເປ່ເພ, ໃນນີ້ການກະທຳ ທີ່ລະເມີດກົດໝາຍແມ່ນ **ກ** ໄດ້ໄປຕຳລົດຂອງ **ຂ**, ການທີ່ເຮັດໃຫ້ຊັບຂອງບຸກຄົນອື່ນເປເພ ຖືວ່າເປັນການກະທຳທີ່ລະເມີດກົດໝາຍ.

ການເນີນເສີຍ ແມ່ນການບໍ່ໃຫ້ຄວາມຊ່ວຍເຫຼືອຜູ້ປະສົບອຸບປະຕິເຫດ ຫຼື ຕົກຢູ່ໃນໄພອັນຕະລາຍທັງໆ ທີ່ຕົນເອງມີຄວາມສາມາດຊ່ວຍເຫຼືອໄດ້.

2.1.2.2. ຄວາມເສັຍຫາຍ

ຄວາມເສັຍຫາຍ ໝາຍເຖິງ ການເຮັດໃຫ້ຄຸນນະພາບ ແລະ ປະລິມານຂອງຊັບສິ່ງຂອງໃດສິ່ງໜຶ່ງຫຼຸດໜ້ອຍລົງຈາກສະພາບເດີມ ຫຼື ການເຮັດໃຫ້ຊັບສິ່ງຂອງຜູ້ໃດຜູ້ໜຶ່ງໄດ້ຮັບການເປ່ເພ ເສັຍຫາຍ

---

[4] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 3 ຂໍ້ 7.

[5] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 5 ວັກ 2.

ເຊັ່ນ ລົດເພ, ເຮືອນເພ, ອາຄານເພ ແລະ ອື່ນໆ. ນອກຈາກນີ້ຄວາມເສັຍຫາຍຍັງພົວພັນເຖິງຊີວິດ, ສຸຂະພາບ ຫຼື ຈິດໃຈຂອງຜູ້ຖືກເສັຍຫາຍ.

ຄວາມເສັຍຫາຍສາມາດແບ່ງອອກເປັນ ສາມ ປະເພດຄື:

- ທາງດ້ານຊັບສິ່ງຂອງ;
- ທາງດ້ານຊີວິດ ຫລື ສຸຂະພາບ;
- ທາງດ້ານຈິດໃຈ.

ຄວາມເສັຍຫາຍທາງດ້ານວັດຖຸ ໝາຍເຖິງ ການເປເພ ຫຼື ການເຮັດໃຫ້ຊັບສິ່ງຂອງໃດໜຶ່ງເສັຍຫາຍ ເຊັ່ນ ເຮືອນຖືກໄຟໄໝ້, ຄວາຍກິນກ້າ ແລະ ອື່ນໆ.

ຄວາມເສັຍຫາຍທາງດ້ານຊີວິດ ຫຼື ສຸຂະພາບ ໝາຍເຖິງ ການໄດ້ຮັບບາດເຈັບ, ເສັຍອົງຄະ ຫຼື ການເສັຍຊີວິດຂອງຜູ້ຖືກເສັຍຫາຍ.

ຕົວຢ່າງ: ກ ຂັບລົດລ່ວງໄຟແດງແລ້ວໄປຕຳກັບລົດ **ຂ** ເຮັດໃຫ້ລົດ **ຂ** ເປເພ ແລະ **ຂ** ເສັຍຊີວິດ.

ຕົວຢ່າງ: ຄ ໄດ້ທຳຮ້າຍຮ່າງກາຍ **ຂ** ເຮັດໃຫ້ **ຂ** ໄດ້ຮັບບາດເຈັບສາຫັດ.

ຄວາມເສັຍຫາຍທາງດ້ານຈິດໃຈ ໝາຍເຖິງ ການເຊື່ອມເສັຍກຽດສັກສີ ຫຼື ຈິດໃຈ ເຊັ່ນ ການປ້ອຍດ່າ, ການໃສ່ຮ້າຍປ້າຍສີ ຫຼື ຫາຄວາມບໍ່ຈິງໃສ່ຜູ້ອື່ນ, ການສູນເສັຍທາງດ້ານຈິດໃຈຍ້ອນຄົນໃນຄອບຄົວເສັຍຊີວິດ ແລະ ອື່ນໆ.

ຄວາມເສັຍຫາຍທີ່ເນື່ອງມາຈາກການກະທຳຂອງບຸກຄົນຜູ້ໃດຜູ້ໜຶ່ງ ທີ່ກ່າວມາຂ້າງເທິ່ງນັ້ນຕ້ອງມີລັກສະນະແນ່ນອນໝາຍວ່າ ໄດ້ເກີດຂຶ້ນແລ້ວ ຫຼື ແນ່ນອນຈະເກີດຂຶ້ນໃນອະນາຄົດ, ຈະບໍ່ຖືວ່າເປັນຄວາມເສັຍຫາຍທີ່ແນ່ນອນ ຖ້າແມ່ນຄວາມເສັຍຫາຍທີ່ອາດຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນໃນອະນາຄົດ. ຄວາມເສັຍຫາຍທີ່ເກີດຂຶ້ນຕ້ອງແມ່ນຄວາມເສັຍຫາຍໂດຍກົງ ທີ່ເປັນຜົນສະທ້ອນໂດຍກົງຈາກການກະທຳທີ່ລະເມີດກົດໝາຍຂອງຜູ້ກະທຳຜິດນັ້ນ.

2.1.2.3. ສາຍພົວພັນລະຫວ່າງ ເຫດ ແລະ ຜົນ

ສາຍພົວພັນເຫດ ແລະ ຜົນ ແມ່ນກົດເກນພາວະວິໄສ ເນື່ອງຈາກວ່າຜົນເສັຍຫາຍ ຈະເກີດຂຶ້ນໄດ້ ກໍຕໍ່ເມື່ອມີເຫດການທີ່ເປັນຕົ້ນກຳເນີດຂອງຄວາມເສັຍຫາຍນັ້ນ.

ສາຍພົວພັນເຫດ ແລະ ຜົນ ຈະບໍ່ມີພຽງແຕ່ລະຫວ່າງການກະທຳທີ່ລະເມີດກົດໝາຍ ຊຶ່ງເປັນຄວາມຜິດທີ່ກໍ່ໃຫ້ເກີດຄວາມເສັຍຫາຍເທົ່ານັ້ນ ແຕ່ຫາກຍັງມີການລະເມີດກົດໝາຍກັບລະດັບຄວາມເສັຍຫາຍທີ່ເກີດຂຶ້ນ. ໃນສາຍພົວພັນເຫດ ແລະ ຜົນ ທີ່ເກີດຂຶ້ນອາດເຮັດໃຫ້ມີຜົນເສັຍຫາຍຫຼາຍຢ່າງ,

ໃນບາງກໍລະນີມີສອງເຫດການເກີດຂຶ້ນ ແຕ່ມີຜົນເສັຍຫາຍອັນດຽວ ເຊັ່ນ ຄົນຂັບລົດຈັກຕົກຂຸມແລ້ວເຮັດໃຫ້ຜູ້ຊ້ອນທ້າຍຕົກລົດ ຈຶ່ງເຮັດໃຫ້ລົດຈັກທີ່ແລ່ນ ຕາມຫຼັງຕຳເຮັດໃຫ້ຜູ້ຊ້ອນທ້າຍໄດ້ຮັບບາດເຈັບສາຫັດ. ເຫັນວ່າການ ໄດ້ຮັບບາດເຈັບນັ້ນແມ່ນເກີດມາຈາກຂັບຂີ່ລົດທັງສອງຄັນ.

ບຸກຄົນໃດໜຶ່ງ ຈະມີຄວາມຮັບຜິດຊອບຕໍ່ການໃຊ້ແທນຄ່າເສັຍຫາຍໄດ້ນັ້ນ ກໍຕໍ່ເມື່ອຫາກມີສາຍພົວພັນເຫດ ແລະ ຜົນ ລະຫວ່າງການກະທຳທີ່ລະເມີດກົດໝາຍຂອງບຸກຄົນນັ້ນ ກັບຄວາມເສັຍຫາຍທີ່ເກີດຂຶ້ນ ຊຶ່ງປະກອບດ້ວຍ ສາມເງື່ອນ ໄຂດັ່ງນີ້:

- ເຫດແມ່ນສິ່ງຈຳເປັນທີ່ພາໃຫ້ເກີດຜົນເສັຍຫາຍ;
- ເຫດຕ້ອງເກີດຂຶ້ນກ່ອນຜົນເສັຍຫາຍ;
- ເຫດຕ້ອງເປັນສາເຫດໂດຍກົງຂອງຜົນເສັຍຫາຍ[6].

ອີງຕາມເງື່ອນໄຂຂ້າງເທິງນັ້ນ ເຫດຕ້ອງເປັນສາເຫດໂດຍກົງຂອງຜົນເສັຍຫາຍ ຈຶ່ງມີຄວາມຮັບຜິດຊອບ. ສ່ວນຄວາມເສັຍຫາຍທີ່ເກີດມາຈາກສາເຫດທາງອ້ອມນັ້ນ ຈະບໍ່ມີຄວາມຮັບຜິດຊອບ. ແຕ່ມີບາງປະເທດ ແມ່ນຮັບຮູ້ຄວາມເສັຍຫາຍທາງອ້ອມ ຊຶ່ງໄດ້ພິຈາລະນາຄະດີຕັດສິນໃຫ້ຜູ້ສ້າງຄວາມເສັຍຫາຍ ຈ່າຍຄ່າເສັຍຫາຍທາງອ້ອມໃຫ້ແກ່ຄອບຄົວຜູ້ເສັຍຊີວິດ ໂດຍໃຫ້ເຫດຜົນວ່າຜູ້ເສັຍຊີວິດດັ່ງກ່າວ ມີທຸລະກິດນ້ອຍໃນຄອບຄົວ ແລະ ການບໍລິຫານທຸລະກິດນັ້ນ ກໍແມ່ນຜູ້ເສັຍຊີວິດເປັນຜູ້ຮັບຜິດຊອບທັງໝົດ.

2.1.2.4. ຄວາມຜິດໂດຍເຈດຕະນາ ແລະ ດ້ວຍຄວາມບໍ່ລະມັດລະວັງ

ຄວາມຜິດ ແມ່ນການປະພຶດຂອງບຸກຄົນໃດໜຶ່ງ ທີ່ລະເມີດກົດໝາຍ ຊຶ່ງໄດ້ສ້າງຄວາມເສັຍຫາຍຕໍ່ຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ຊຶ່ງລວມເຖິງຊີວິດ, ສຸຂະພາບ, ກຽດສັກສີ, ຈິດໃຈ. ຄວາມຜິດດັ່ງກ່າວສະແດງອອກດ້ວຍການກະທຳ ຫຼື ການເມີນເສີຍ ຊຶ່ງເປັນການລະເມີດລະບຽບກົດໝາຍ ແລະ ກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ[7].

ຄວາມຜິດໂດຍເຈດຕະນາ ແມ່ນການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳສາມາດຮູ້ ຫຼື ຄາດຄະເນໄດ້ວ່າການກະທຳ ຫຼື ການເມີນເສີຍນັ້ນຈະກໍ່ຄວາມເສັຍຫາຍ, ເປັນອັນຕະລາຍຕໍ່ສັງຄົມ ແຕ່ກໍ່ຈົງໃຈເຮັດ ຫຼື ປະປ່ອຍໃຫ້ເກີດຂຶ້ນ ເຊັ່ນ ການເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຫຼື ເສັຍຊີວິດ, ການເຮັດໃຫ້ຊັບຂອງຜູ້ອື່ນເສັຍຫາຍ ແລະ ອື່ນໆ.

---

[6] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 87.

[7] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງປີ 2008, ມາດຕາ 86.

ຄວາມຜິດດ້ວຍຄວາມບໍ່ລະມັດລະວັງ ແມ່ນການກະທຳ ຫຼື ການເມີນເສີຍ ຊຶ່ງຜູ້ກະທຳຜິດສາມາດຄາດຄະເນໄດ້ວ່າການກະທຳ ຫຼື ການເມີນເສີຍຂອງຕົນນັ້ນ ອາດມີຜົນສະທ້ອນທີ່ເປັນອັນຕະລາຍ ຊຶ່ງໄດ້ສ້າງຄວາມເສັຍຫາຍຕໍ່ຊັບຂອງ ລັດ, ລວມໝູ່ ຫຼື ບຸກຄົນ ຊຶ່ງລວມເຖິງຊີວິດ, ສຸຂະພາບ, ກຽດສັກສີ, ຈິດໃຈ, ແຕ່ຍ້ອນການຖືເບົາ ຫຼື ຄິດວ່າຖ້າມັນເກີດຂຶ້ນ ຕົນເອງສາມາດຄວບຄຸມໄດ້ ເຊັ່ນ ການເຮັດໃຫ້ຊັບຂອງຜູ້ອື່ນເສັຍຫາຍຍ້ອນຄວາມບໍ່ລະມັດລະວັງ, ການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ ຫຼື ເສັຍຊີວິດດ້ວຍຄວາມບໍ່ລະມັດລະວັງ ແລະ ອື່ນໆ.

2.1.3. ຄວາມເສັຍຫາຍທີ່ເນື່ອງມາຈາກການນຳໃຊ້ສິດເກີນຄວນ

ການນຳໃຊ້ສິດເກີນຄວນ ໝາຍເຖິງການກະທຳຂອງບຸກຄົນໃດໜຶ່ງ ເກີນຂອບເຂດທີ່ຕົນມີສິດ ຊຶ່ງແຕະຕ້ອງເຖິງສິດ, ເສລີພາບ, ຊີວິດ ແລະ ສຸຂະພາບຂອງບຸກອື່ນ. ສະນັ້ນ, ຖ້າບຸກຄົນຜູ້ໃດຫາກໄດ້ນຳໃຊ້ສິດຂອງຕົນເກີນຄວນໂດຍເຈດຕະນາ ບຸກຄົນຜູ້ນັ້ນຕ້ອງຮັບຜິດຊອບໃຊ້ແທນຄວາມເສັຍຫາຍ ທີ່ເນື່ອງມາຈາກການນຳໃຊ້ສິດເກີນຄວນນັ້ນ.

ຕົວຢ່າງ: ກ ແລະ **ຂ** ເຮືອນໃກ້ຄຽງກັນ **ຂ** ເປັນພະຍາດໂລກຫົວໃຈ ແຕ່ **ກ** ກໍຍັງເປີດເພັງສຽງດັງເກີນຄວນ ຊຶ່ງຄອບຄົວ ຂອງ **ຂ** ໄດ້ເຕືອນຫຼາຍຄັ້ງແລ້ວ ແຕ່ **ກ** ບໍ່ເອົາໃຈໃສ່ຕໍ່ການຕັກເຕືອນ ຈຶ່ງເຮັດໃຫ້ **ຂ** ທົນຕໍ່ສຽງດັງບໍ່ໄດ້ ເກີດຊ໊ອກ ແລະ ເສັຍຊີວິດ ໂດຍມີການຢັ້ງຢືນຂອງແພດ. ຕໍ່ກັບການກະທຳຂອງ **ກ** ເຫັນວ່າ ເປັນການໃຊ້ສິດເກີນຄວນ ດັ່ງນັ້ນ ຄວາມເສັຍຫາຍທີ່ເກີດຂຶ້ນ **ກ** ເປັນຜູ້ຮັບຜິດຊອບ.

2.1.4. ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເນື່ອງມາຈາກສະພາວະທີ່ຈຳເປັນ

ສະພາວະທີ່ຈຳເປັນ ແມ່ນການກະທຳດ້ວຍຄວາມຈຳເປັນຂອງບຸກຄົນໃດໜຶ່ງແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ ຫຼື ສັງຄົມ, ຊີວິດ, ສຸຂະພາບ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ. ຄວາມເສັຍຫາຍທີ່ເນື່ອງມາຈາກສະພາວະທີ່ຈຳເປັນຕ້ອງໄດ້ຮັບການໃຊ້ແທນ ໂດຍອີງໃສ່ສະພາບຕົວຈິງ ສານອາດຈະໃຫ້ຜູ້ກະທຳ ຫຼື ບຸກຄົນທີສາມ ຊຶ່ງໄດ້ຮັບຜົນປະໂຫຍດຈາກການກະທຳຂອງຜູ້ກໍ່ຄວາມເສຍຫາຍນັ້ນ ເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍ[8].

ຕົວຢ່າງ: ຈ ເປັນລູກຈ້າງຂັບເຮືອໃຫ້ **ສ** ຊຶ່ງບັນທຸກຊີມັງ ຊາວ ໂຕນ, ເຂົ້າສານ ໜຶ່ງຮ້ອຍ ໂຕນ ແລ່ນແຕ່ວຽງຈັນ ເພື່ອຂຶ້ນໄປຫຼວງພະບາງ ພໍຮອດເຄິ່ງທາງ ເກີດລົມພາຍຸ ຊຶ່ງຈະເຮັດໃຫ້ເຮືອຫຼົ້ມ **ຈ** ຜູ້ຂັບເຮືອ ຈຶ່ງຂົນຊີມັງ ແລະ ເຂົ້າຢ່າງລະ ສິບ ໂຕນ ຖິ້ມລົງນ້ຳ ເພື່ອປ້ອງກັນບໍ່ໃຫ້ເຮືອຫຼົ້ມ, ຕໍ່ຜົນເສັຍຫາຍດັ່ງກ່າວ **ສ** ເຈົ້າຂອງເຮືອຕ້ອງຮັບຜິດຊອບ.

---

[8] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 89.

ຕົວຢ່າງ: ເຮືອນຫຼັງໜຶ່ງກາລັງຖືກໄຟໄໝ້ ຊຶ່ງລົດດັບເພີງບໍ່ສາມາດເຂົ້າໄປມອດໄຟໄດ້ຍ້ອນ ທາງເຂົ້າຄັບແຄບ ລົດດັບເພີງບໍ່ສາມາດເຂົ້າໄດ້ ເພື່ອນບ້ານໄກ້ຄຽງຈຶ່ງໄດ້ມ້າງຮົ້ວແຄມທາງດັ່ງ ກ່າວ ເພື່ອເອົາ ລົດເຂົ້າໄປມອດໄຟ, ຕໍ່ຄວາມເສັຍຫາຍດັ່ງກ່າວ ເພື່ອນບ້ານໄກ້ຄຽງນັ້ນບໍ່ມີຄວາມຮັບຜິດຊອບ ເນື່ອງ ຈາກການກະທຳນັ້ນເຮັດເພື່ອປ້ອງກັນຄວາມເສັຍຫາຍທີ່ຈະເກີດຂຶ້ນຫຼາຍກວ່າ. ຄວາມເສັຍຫາຍ ຈາກ ການມ້າງຮົ້ວດັ່ງກ່າວ ແມ່ນຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການປົກປ້ອງນັ້ນເປັນຜູ້ຮັບຜິດຊອບ.

2.1.5. ຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ຫຼາຍຄົນກໍ່ຂຶ້ນ

ຄວາມເສັຍຫາຍ ຊຶ່ງເກີດຈາກຜູ້ກໍ່ຄວາມເສັຍຫາຍຮ່ວມກັນຫຼາຍຄົນ, ທຸກຄົນທີ່ໄດ້ຮ່ວມມື ກັນມີຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນ. ໃນພາກປະຕິບັດຕົວຈິງຄວາມຮັບຜິດຊອບຕໍ່ ຄວາມເສັຍຫາຍດັ່ງກ່າວ ສານອາດຈະພິຈາລະນາໃຫ້ບຸກຄົນໃດໜຶ່ງ ຫຼື ຫຼາຍຄົນໃນຈຳນວນຜູ້ກໍ່ຄວາມ ເສັຍຫາຍນັ້ນ ໃຊ້ແທນຄ່າເສັຍຫາຍທັງໝົດກ່ອນກໍໄດ້, ແຕ່ຜູ້ທີ່ໃຊ້ແທນຄ່າເສັຍກ່ອນນັ້ນມີສິດທວງເອົາ ນຳບຸກຄົນທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນຄືນ.

ການທີ່ສານພິຈາລະນາໃຫ້ບຸກຄົນໃດໜຶ່ງ ຫຼື ຫຼາຍຄົນໃນຈຳນວນຜູ້ກໍ່ຄວາມເສັຍຫາຍໃຊ້ແທນ ກ່ອນ ກໍລະນີ ດັ່ງນີ້:

ຜູ້ກໍ່ຄວາມເສັຍຫາຍໃດໜຶ່ງ ຫຼື ຫຼາຍຄົນໃນຈຳນວນຜູ້ກໍ່ຄວາມເສັຍຫາຍໄດ້ເອົາຕົວຫຼົບໜີ ກໍ ລະດັ່ງກ່າວນີ້ ສານສາມາດພິຈາລະນາໃຫ້ບຸກຄົນ ທີ່ບໍ່ໄດ້ເອົາຕົວຫຼົບໜີໃຊ້ແທນຄ່າເສັຍຫາຍທັງໝົດ ກ່ອນກໍໄດ້ ແລ້ວຈຶ່ງໃຫ້ຜູ້ກ່ຽວທວງເອົານຳບຸກຄົນທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນ.

ຜູ້ກໍ່ຄວາມເສັຍຫາຍໃດໜຶ່ງ ຫຼື ຫຼາຍຄົນໃນຈຳນວນຜູ້ກໍ່ຄວາມເສັຍຫາຍເປັນຜູ້ທີ່ມີເງື່ອນໄຂ ໃນການໃຊ້ແທນ ສານສາມາດພິຈາລະນາຕັດສິນໃຫ້ບຸກຄົນດັ່ງກ່າວ ໃຊ້ແທນຄ່າເສັຍຫາຍທັງໝົດເສັຍ ກ່ອນ ແລ້ວຈຶ່ງໃຫ້ຜູ້ກ່ຽວທວງເອົານຳບຸກຄົນທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນ. ແຕ່ກໍລະນີ ຕ້ອງມີການຮ້ອງ ຂໍຈາກຜູ້ທີ່ໄດ້ຮັບຄວາມເສັຍຫາຍ ແລະ ສານກໍຕ້ອງມີຂໍ້ມູນຫຼັກຖານທີ່ຢັ້ງຢືນໜັກແໜ້ນວ່າຜູ້ກໍ່ຄວາມ ເສັຍຫາຍທີ່ຈະໃຫ້ໃຊ້ແທນກ່ອນນັ້ນມີຖານະເສດຖະກິດດີ.

ຕົວຢ່າງ: ກ, ຂ ແລະ **ຄ** ພ້ອມກັນແກວ່ງກ້ອນຫີນໃສ່ແກ້ວລົດແຕກ, ຊຶ່ງບໍ່ສາມາດກຳນົດ ວ່າຄວາມເສັຍຫາຍເກີດຈາກບຸກຄົນໃດ. ໃນກໍລະນີດັ່ງກ່າວ **ກ, ຂ** ແລະ **ຄ** ຈະມີຄວາມຮັບຜິດຊອບ ຮ່ວມກັນ.

2.1.6. ການໃຊ້ແທນ, ການຄິດໄລ່ຄ່າເສັຍຫາຍ ແລະ ຄ່າປ່ວຍການ

ການໃຊ້ແທນຄ່າເສັຍຫາຍ ແມ່ນການທົດແທນເປັນຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງຜູ້ຮັບ ຜິດຊອບເພື່ອໃຊ້ແທນ ຫຼື ຟື້ນຟູສິດໃຫ້ຜູ້ໄດ້ຮັບຄວາມເສັຍຫາຍ. ການໃຊ້ແທນຄ່າເສັຍຫາຍບໍ່ພຽງແຕ່

ຄວາມເສັຍຫາຍທີ່ເກີດຈາກການລະເມີດກົດໝາຍເທົ່ານັ້ນ ຜູ້ກໍ່ຄວາມເສັຍຫາຍອາດຈະໃຊ້ແທນຄ່າເສັຍຫາຍ ທີ່ເນື່ອງມາຈາກການເຮັດໃຫ້ຜູ້ອື່ນເສັຍໂອກາດ, ເສັຍລາຍໄດ້ ຫຼື ຄ່າປ່ວຍ ການຕື່ມອີກ.

ເມື່ອມີຄວາມເສັຍຫາຍເກີດຂຶ້ນ ຜູ້ກໍ່ຄວາມເສັຍຫາຍ ຫຼື ຜູ້ລະເມີດກົດໝາຍ ຫຼື ຜູ້ໄດ້ຮັບຜົນປະໂຫຍດ ຕ້ອງມີຄວາມຮັບຜິດຊອບໃນການໃຊ້ແທນຄ່າເສັຍຫາຍ, ບາງກໍລະນີອາດຈະມີການໃຊ້ແທນຄ່າປ່ວຍການໃຫ້ແກ່ຜູ້ຖືກເສັຍຫາຍຕື່ມອີກ. ຄ່າເສັຍຫາຍ ແລະ ຄ່າປ່ວຍການນັ້ນ ຕ້ອງຄິດໄລ່ບົນພື້ນຖານຫຼັກການ ແລະ ໃຫ້ສອດຄ່ອງກັບຄວາມຜິດຂອງຜູ້ກໍ່ຄວາມເສັຍຫາຍ[9].

ໂດຍທົ່ວໄປແລ້ວ ໃນການໃຊ້ແທນຄ່າເສັຍແມ່ນທົດແທນດ້ວຍເງິນ ເພາະເງິນເປັນວັດຖຸສື່ກາງທີ່ສາມາດທົດແທນຄ່າເສັຍຫາຍ ຫຼື ວັດຖຸສິ່ງຂອງອື່ນໄດ້[10]. ການໃຊ້ແທນຄ່າເສັຍຫາຍ ໃນບາງກໍລະນີກໍສາມາດຄິດໄລ່ເປັນເງິນໄດ້ ແຕ່ບາງກໍລະນີບໍ່ສາມາດຄິດໄລ່ເປັນເງິນໄດ້ ເຊັ່ນ ການເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຫຼື ເສັຍຊີວິດ, ແຕ່ເຖິງຢ່າງໃດກໍຕາມ ເຖິງແມ່ນວ່າຄວາມເສັຍຫາຍດັ່ງກ່າວນັ້ນ ບໍ່ສາມາດຄິດໄລ່ເປັນມູນຄ່າ ຫຼື ຈຳນວນເງິນໄດ້ກໍຕາມ ແຕ່ການຕອບແທນ ຫຼື ການໃຊ້ແທນຄ່າເສັຍຫາຍດັ່ງກ່າວດ້ວຍເງິນ ກໍແມ່ນວິທີການໜຶ່ງທີ່ນຳໃຊ້ໃນປັດຈຸບັນ. ການໃຊ້ແທນຄ່າເສັຍຫາຍເປັນເງິນ ເຖິງແມ່ນວ່າຈະບໍ່ເຮັດໃຫ້ຜູ້ເສັຍອົງຄະ ຫຼື ຜູ້ເສັຍຊີວິດຄືນມາມີສະພາບປົກກະຕິ ຫຼື ຟື້ນຄືນມາໄດ້ ແຕ່ໃນຄວາມເປັນຈິງ ມັນກໍບໍ່ມີວິທີອື່ນທີ່ດີກວ່ານີ້ໄດ້ ສຳລັບການຟື້ນຟູສະພາບຈິດໃຈຂອງຜູ້ຖືກເສັຍຫາຍ ຫຼື ຍາດຕິພີ່ນ້ອງຂອງຜູ້ຖືກເສັຍຫາຍ. ສ່ວນຄ່າເສັຍຫາຍທີ່ສາມາດຄິດໄລ່ເປັນຈຳນວນເງິນໄດ້ນັ້ນມີບາງກໍລະນີ ກໍລວມຢູ່ນຳກັນກັບຄວາມເສັຍຫາຍທີ່ບໍ່ສາມາດຄິດໄລ່ເປັນເງິນໄດ້ ເຊັ່ນ ການເຮັດໃຫ້ບຸກຄົນອື່ນເສັຍຊີວິດ. ແຕ່ກ່ອນບຸກຄົນດັ່ງກ່າວຈະເສັຍຊີວິດ ໄດ້ມີການໃຊ້ຈ່າຍຄ່າປິ່ນປົວ, ນັ້ນແມ່ນຄ່າເສັຍຫາຍທີ່ຄິດໄລ່ເປັນເງິນໄດ້, ນອກຈາກນີ້ຍັງກວມໄປເຖິງຄ່າມ້ຽນຄາບສິ່ງສະການ ແລະ ເຮັດບຸນກົນທານຕາມຮີດຄອງປະເພນີຕື່ມອີກ.

ຕົວຢ່າງ: **ກ** ຂັບລົດລ່ວງລະເມີດກົດຈະລາຈອນໄປຕາກັບລົດຂອງ **ຂ** ເຮັດໃຫ້ລົດຂອງ **ຂ** ເປ່ເພ, ຄວາມຮັບຜິດຊອບຂອງ **ກ** ໃນການໃຊ້ແທນຄ່າເສັຍຫາຍນັ້ນແມ່ນຄ່າ ສ້ອມແປງລົດຂອງ **ຂ** ໃຫ້ຄືນສະພາບເດີມ.

---

[9] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 91 ວັກ 1.

[10] ປຶ້ມ ຖາມ-ຕອບ ກົດໝາຍແພ່ງ ໂດຍກຸ່ມຄົ້ນຄວ້າກົດໝາຍແພ່ງ ປີ 2013, ໜ້າ 108.

ນອກຈາກຄ່າເສັຍຫາຍແລ້ວ ຜູ້ກໍ່ຄວາມເສັຍຫາຍ ອາດຈະຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການນຳອີກ ເຊັ່ນ ລາຍຮັບຊຶ່ງຜູ້ຖືກເສັຍຫາຍຄວນຈະໄດ້, ຄ່າໃຊ້ຈ່າຍເພີ່ມຂອງຜູ້ຖືກເສັຍຫາຍ ຊຶ່ງເນື່ອງມາຈາກການກະທຳຜິດ[11].

ຄ່າປ່ວຍການ ໝາຍເຖິງ ຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງຜູ້ຮັບຜິດຊອບ ເພື່ອທົດແທນລາຍໄດ້ຂອງຜູ້ຖືກເສັຍຫາຍ ທີ່ຄວນຈະໄດ້ຮັບຈາກວຽກງານ ຫຼື ເວລາທີ່ເສັຍໄປ[12]. ດັ່ງນັ້ນ, ຖ້າຜູ້ຖືກເສັຍຫາຍ ຫຼື ຜູ້ຖືກເຄາະຮ້າຍຫາກມີວຽກງານເຮັດປົກກະຕິ ແລະ ມີລາຍຮັບເປັນເງິນ ຫຼື ຄ່າແຮງງານເພື່ອລ້ຽງຊີບໃນເວລາທີ່ຜູ້ກ່ຽວໄດ້ຮັບຄວາມເສັຍຫາຍ ຊຶ່ງພາໃຫ້ຂາດລາຍໄດ້ຜູ້ກ່ຽວກໍມີສິດໄດ້ຮັບການຕອບແທນເງິນປະໂຫຍດດັ່ງກ່າວນັ້ນຄືນ ຕາມລາຍໄດ້ທີ່ຜູ້ກ່ຽວຂາດໄປ ໃນໄລຍະໄດ້ຮັບບາດເຈັບ ຫຼື ປິ່ນປົວ.

ຕົວຢ່າງ: ກໍລະນີລາຍໄດ້ຈາກການອອກແຮງງານ ວັນລະ 50.000 ກີບ ຜູ້ກ່ຽວໄດ້ຮັບບາດເຈັບຍ້ອນລົດຂອງ **ຂ** ຕຳຈົ່ງເຂົ້າປິ່ນປົວຢູ່ໂຮງໝໍເປັນເວລາ ສອງທົດ ຈົ່ງຫາຍເປັນປົກກະຕິ ສະນັ້ນ, ຕ້ອງຄິດໄລ່ລາຍຮັບຂອງຜູ້ກ່ຽວທີ່ເສັຍໄປໃນໄລຍະສອງອາທິດໃຫ້ຜູ້ກ່ຽວ.

ຕົວຢ່າງ: ສ ໄດ້ຂັບຂີ່ລົດຕຳເອົາ **ຈ** ເຮັດໃຫ້ **ຈ** ແຂນຫັກບໍ່ສາມາດໄປເຮັດວຽກໄດ້ ຊຶ່ງ **ຈ** ມີອາຊີບເປັນກຳມະກອນຕັດຫຍິບມີລາຍໄດ້ເດືອນລະ 800.000 ກີບ ຕາມໃບຢັ້ງຢືນຂອງໂຮງງານທີ່ກ່ຽວຂ້ອງ, ໃນກໍລະນີດັ່ງກ່າວ **ສ** ຕ້ອງໄດ້ຮັບຜິດຊອບຄ່າປິ່ນປົວ **ຈ** ຈົນ ຫາຍເປັນປົກກະຕິ, ພ້ອມກັນນັ້ນຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການຂອງ **ຈ** ເດືອນລະ 800.000 ກີບ ຈົນກວ່າ **ຈ** ສາມາດໄປ ເຮັດວຽກໄດ້.

ໃນກໍລະນີທີ່ຜູ້ຖືກເສັຍຫາຍ ຫາກມີຄວາມຜິດຜູ້ກ່ຽວກໍຕ້ອງມີສ່ວນຮັບຜິດຊອບຕໍ່ຄວາມເສັຍຫາຍ ແລະ ຄ່າປ່ວຍການນັ້ນເໝືອນກັນ[13].

ຕົວຢ່າງ: ລົດຂອງ **ກ** ໄດ້ຕຳກັບລົດຂອງ **ຂ** ເຮັດໃຫ້ລົດຂອງ **ກ** ຖືກເປ່ເພ ແລະ ໄດ້ສ້ອມແປງໃນມູນຄ່າ 5.000.000 ກີບ, ສ່ວນລົດຂອງ **ຂ** ສ້ອມແປງມູນຄ່າ 2.000.000 ກີບ, ຜ່ານການພິຈາລະນາ ແລ້ວເຫັນວ່າ **ກ** ແລະ **ຂ** ມີຄວາມຜິດເທົ່າກັນ ໝາຍຄວາມວ່າ ທັງສອງຕ້ອງມີຄວາມຮັບຜິດຊອບຕໍ່ຄ່າເສັຍຫາຍຜູ້ລະເຄິ່ງ ເທົ່າກັບ 5.000.000 ກີບ + 2.000.000 ກີບ ຫານ 2 ຄົນ = 3.500.000 ກີບ, ແຕ່ໃນນີ້ **ຂ** ມີຄວາມເສັຍຫາຍພຽງແຕ່ 2.000.000 ກີບ ຜູ້ກ່ຽວຈົ່ງມີພັນທະໃຊ້ແທນໃຫ້ **ກ** ຈຳນວນ 1.500.000 ກີບ.

---

[11] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 91 ວັກ 3.

[12] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 3 ຂໍ້ 9.

[13] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 91 ວັກ 3.

ໃນກໍລະນີຜູ້ຖືກເສັຍຫາກບໍ່ມີວຽກງານປະຈຳ ຫຼື ເປັນບຸກຄົນທີ່ວ່າງງານ ຜູ້ຖືກເສັຍຫາຍດັ່ງກ່າວອາດຈະບໍ່ໄດ້ຮັບຄ່າປ່ວຍການ ເນື່ອງຈາກວ່າ ຜູ້ກ່ຽວບໍ່ມີລາຍຮັບເປັນປົກກະຕິ.

ລາຍຮັບ ຫຼື ລາຍໄດ້ ຂອງຜູ້ຖືກເສັຍຫາຍ ແມ່ນການເສັຍໂອກາດໃນສິ່ງທີ່ຄວນໄດ້ຮັບ ໃນການເຄື່ອນໄຫວປົກກະຕິ, ລາຍຮັບຂອງຜູ້ຖືກເສັຍຫາຍມີ ສອງ ກໍລະນີຄື ລາຍຮັບທາງດ້ານເສດຖະກິດ ແລະ ການເສັຍລາຍຮັບທາງດ້ານແຮງງານ. ການເສັຍລາຍຮັບທາງດ້ານເສດຖະກິດ ແມ່ນການຂາດລາຍຮັບ ຫຼື ລາຍໄດ້ຕາມປົກກະຕິ ຊຶ່ງຜູ້ຖືກເສັຍຫາຍຄວນຈະໄດ້ຮັບຜົນປະໂຫຍດ ຈາກຊັບສິ່ງຂອງນັ້ນ, ແຕ່ເມື່ອຜູ້ກໍ່ຄວາມເສັຍຫາຍໄດ້ກະທຳ ຫຼື ເຮັດໃຫ້ເປ່ເພ ຈຶ່ງບໍ່ສາມາດນຳໃຊ້ເພື່ອສ້າງລາຍຮັບນັ້ນຕາມປົກກະຕິ[14].

ຕົວຢ່າງ: ກ ເຮັດກິດຈະການໂຮງງານເຂົ້າຈີ່ ແຕ່ລະວັນ **ກ** ຕ້ອງໄດ້ສົ່ງເຂົ້າຈີ່ໃຫ້ແກ່ລູກຄ້າ ແລະ **ກ** ມີລາຍໄດ້ຈາກການຂາຍເຂົ້າຈີ່ມື້ລະ 300.000 ກີບ ແຕ່ຖືກ **ຂ** ຂັບຂີ່ລົດມາຕຳໂຮງງານຂອງ **ກ** ເປ່ເພ ແລະ **ກ** ກໍບໍ່ສາມາດຜະລິດເຂົ້າຈີ່ໄດ້ ຊຶ່ງເຮັດໃຫ້ **ກ** ເສັຍລາຍໄດ້ ໃນກໍລະນີດັ່ງກ່າວ **ຂ** ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ.

ການເສັຍລາຍຮັບທາງດ້ານແຮງງານ ແມ່ນການເສັຍລາຍໄດ້ຈາກການອອກແຮງງານຕາມວິຊາສະເພາະ ຫຼື ວິຊາຊີບຂອງຜູ້ຖືກເສັຍຫາຍນັ້ນ ແຕ່ຍ້ອນຜູ້ກ່ຽວໄດ້ຮັບບາດເຈັບຈາກການກະທຳຂອງຜູ້ກໍ່ຄວາມເສັຍຫາຍ ຈຶ່ງເຮັດໃຫ້ຜູ້ຖືກເສັຍຫາຍບໍ່ສາມາດໄດ້ຮັບຄ່າແຮງງານ

ຕົວຢ່າງ: ຄ ມີອາຊີບແຕ້ມຮູບ ແຕ່ **ງ** ເຮັດໃຫ້ແຂນຂອງ **ຄ** ຫັກເບື້ອງໜຶ່ງ ແລະ **ຄ** ກໍບໍ່ສາມາດແຕ້ມຮູບຄືແຕ່ກ່ອນ. ນອກຈາກນີ້ ຄ່າເສັຍຫາຍຍັງລວມໄປເຖິງການເຮັດໃຫ້ຜູ້ອື່ນເສັຍຫາຍ ທີ່ມີພັນທະຕິດພັນກັບບຸກຄົນອື່ນຕື່ມອີກ ເຊັ່ນ **ກ** ຕ້ອງຫາເງິນເພື່ອສົ່ງເງິນໃຫ້ເຈົ້າໜີ້ທຸກມື້ ແຕ່ຍ້ອນຖືກບາດເຈັບ **ກ** ຈຶ່ງບໍ່ສາມາດອອກແຮງງານໄດ້ປົກກະຕິ ແລະ ບໍ່ສາມາດສົ່ງເງິນໃຫ້ເຈົ້າໜີ້ໄດ້ຕາມປົກກະຕິ ເນື່ອງຈາກການກະທຳຂອງຜູ້ກໍ່ຄວາມເສັຍຫາຍເຮັດໃຫ້ **ກ** ຖືກປັບໃໝ, ໃນກໍລະນີດັ່ງກ່າວຜູ້ກໍ່ຄວາມເສັຍຫາຍຕ້ອງຮັບຜິດຊອບເໝືອນກັນ.

ຄ່າໃຊ້ຈ່າຍເພີ່ມຂອງຜູ້ຖືກເສັຍຫາຍ ໝາຍເຖິງຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງຜູ້ກໍ່ຄວາມເສັຍຫາຍ ຕ້ອງໄດ້ໃຊ້ແທນ ທີ່ຜູ້ຖືກເສັຍຫາຍໄດ້ຈ່າຍໄປນັ້ນ ຊຶ່ງໃນເວລາປົກກະຕິ ຜູ້ຖືກເສັຍຫາຍຈະບໍ່ໄດ້ໃຊ້ຈ່າຍ ແຕ່ເວລາຖືກຜູ້ອື່ນສ້າງຄວາມເສັຍຫາຍໃຫ້ ຈຶ່ງຈຳເປັນຕ້ອງໄດ້ໃຊ້ຈ່າຍເງິນ ຫຼື ວັດຖຸສິ່ງ

[14] ດາວອນ ຫວ່າງວິຈິດ, ປຶ້ມກົດໝາຍແພ່ງ ປີ 2003, ໜ້າ 37.

ຂອງເພີ່ມ ເພື່ອອຳນວຍຄວາມສະດວກ ຫຼື ເພື່ອໃຫ້ຜູ້ອື່ນຊ່ວຍເຫຼືອຕົນໃນເວລາໄດ້ຮັບບາດເຈັບ ຫຼື ເວລາປິ່ນປົວຢູ່ນັ້ນ[15].

ຕົວຢ່າງ: ກ ເປັນຍິງໂສດ ຢູ່ເຮືອນເຊົ່າ ແລະ ຍາດຕິພີ່ນ້ອງກໍຢູ່ຫ່າງໄກສອກຫຼີກ. ໃນວັນທີ 13 ກຸມພາ 2011 **ຂ** ໄດ້ດື່ມເຫຼົ້າແລ້ວລະເມີດກົດຈະລາຈອນຂັບຂີ່ລົດຕຳ **ກ** ເຮັດໃຫ້ໄດ້ຮັບບາດເຈັບຂາຫັກເບື້ອງຊ້າຍ, **ກ** ໄດ້ເຂົ້າປິ່ນປົວຢູ່ໂຮງໝໍ **ຈ** ເປັນເວລາ ສາມ ອາທິດ (21 ວັນ) ຊຶ່ງໄດ້ໃຊ້ຈ່າຍຄ່ານອນໂຮງໝໍ ແລະ ຄ່າຢາຈຳນວນ 15.000.000 ກີບ ແລະ ຍ້ອນຜູ້ກ່ຽວບໍ່ມີຍາດພີ່ນ້ອງມາເຝົ້າເວລານອນໂຮງໝໍ ຈຶ່ງໄດ້ຈ້າງຄົນມາເຝົ້າ ມື້ໜຶ່ງ 70.000 ກີບ x 21 ວັນ = 1.470.000 ກີບ ແລະ ໄລຍະນອນປິ່ນປົວຢູ່ໂຮງໝໍ ຜູ້ກ່ຽວຖືກຫັກເງິນເດືອນໆລະ 800.000 ກີບ, ພາຍຫຼັງ ປິ່ນປົວແລ້ວ ແຂນເບື້ອງຊ້າຍຂອງ **ກ** ບໍ່ສາມາດໃຊ້ງານໄດ້ປົກກະຕິ ແລະ ບໍ່ສາມາດເຮັດວຽກເຮືອນດ້ວຍຕົນເອງ ຜູ້ກ່ຽວຈຶ່ງໄດ້ຈ້າງຄົນມາເຮັດວຽກເຮືອນໃຫ້ ເປັນໄລຍະເວລາ ສາມ ເດືອນ ໂດຍມີຄ່າແຮງງານເດືອນລະ 500.000 ກີບ. ດັ່ງນັ້ນ, **ຂ** (ຜູ້ກໍ່ຄວາມເສັຍຫາຍ) ນອກຈາກຈະຈ່າຍຄ່າເສັຍຫາຍໄລຍະປິ່ນປົວຢູ່ໂຮງໝໍ ຈຳນວນ 15.000.000 ກີບ ແລະ ຄ່າປ່ວຍການຈຳນວນ 2.400.000 ກີບ ແລ້ວ **ຂ** ຕ້ອງໄດ້ທົດແທນຄ່າໃຊ້ຈ່າຍເພີ່ມ ໃຫ້ **ກ** ຕື່ມອີກ ເຊັ່ນ ຄ່າຈ້າງຄົນເຝົ້າເວລານອນໂຮງໝໍ ຈຳນວນ 1.470.000 ກີບ ແລະ ຄ່າຈ້າງຜູ້ມາເຮັດວຽກເຮືອນ ຈຳນວນ 500.000 ກີບ ໄລຍະ ສາມ ເດືອນ.

2.2. ຄວາມຮັບຜິດຊອບທີ່ເນື່ອງມາຈາກການກະທຳຂອງບຸກຄົນອື່ນ

2.2.1. ຄວາມໝາຍ

ຄວາມຮັບຜິດຊອບ ທີ່ເນື່ອງມາຈາກການກະທຳຂອງບຸກຄົນອື່ນ ແມ່ນຄວາມຮັບຜິດຊອບຂອງຜູ້ປົກຄອງ, ຜູ້ຄຸ້ມຄອງ ແລະ ຜູ້ໃຊ້ວຽກ ຍ້ອນຜູ້ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງຕົນໄດ້ໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນແລ້ວ ຕ້ອງເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ທີ່ພວກເຂົາໄດ້ກໍ່ຂຶ້ນ, ເວັ້ນເສັຍແຕ່ຄວາມເສັຍຫາຍທີ່ເກີດຂຶ້ນນັ້ນ ຫາກເກີດຈາກການບໍ່ປະຕິບັດຕາມຄຳສັ່ງຂອງຜູ້ໃຊ້ວຽກ.

2.2.2. ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ ແລະ ຜູ້ຮັບໃຊ້ວຽກ

ຜູ້ໃຊ້ວຽກ ໝາຍເຖິງບຸກຄົນ ຫຼື ນິຕິບຸກຄົນ ຜູ້ທີ່ໄດ້ສັ່ງ ຫຼື ມອບໝາຍໃຫ້ບຸກຄົນໃດໜຶ່ງປະຕິບັດວຽກງານ ຫຼື ກະທຳສິ່ງໃດໜຶ່ງເພື່ອຜົນປະໂຫຍດຂອງຕົນ. ອີກຄວາມໝາຍໜຶ່ງ ຜູ້ໃຊ້ວຽກນັ້ນ ແມ່ນບຸກຄົນ ຫຼື ອົງການທີ່ມີສິດອຳນາດໃຫ້ຄຳສັ່ງແກ່ບຸກຄົນໃດໜຶ່ງ ຊຶ່ງຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ຜູ້ຮັບໃຊ້ວຽກ ເຂົ້າໃນການປະຕິບັດໜ້າທີ່ວຽກງານ ຕາມການມອບໝາຍ.

[15] ປຶ້ມ ຖາມ-ຕອບ ກົດໝາຍແພ່ງ ໂດຍກຸ່ມຄົ້ນຄວ້າກົດໝາຍແພ່ງ ປີ 2013, ໜ້າ 110.

ຜູ້ໃຊ້ວຽກຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ທີ່ຜູ້ຮັບໃຊ້ວຽກໄດ້ກໍ່ຄວາມເສັຍຫາຍ ໃຫ້ແກ່ບຸກຄົນອື່ນ ໃນເວລາປະຕິບັດໜ້າທີ່ຕາມການມອບໝາຍ.

ຕົວຢ່າງ: ກ ຂັບຂີ່ລົດໄປວຽກຕາມການມອບໝາຍຂອງ **ຂ** ໃນເວລາເດີນທາງລົດເກີດມີບັນຫາເບກແຕກ ຈຶ່ງຕຳເອົາເຮືອນຂອງ **ງ** ເປ່ເພເລັກນ້ອຍ ຕໍ່ການກະທຳດັ່ງກ່າວຂອງ **ກ** ທີ່ໄດ້ສ້າງຄວາມເສັຍຫາຍໃຫ້ **ງ** ແມ່ນຄວາມຮັບຜິດຊອບຂອງ **ຂ** ເນື່ອງຈາກວ່າ **ຂ** ເປັນຜູ້ໃຊ້ວຽກ.

ການຫາໃຫ້ບຸກຄົນອື່ນເຮັດວຽກ ເພື່ອຜົນປະ�โຫຍດຂອງຕົນຖ້າຜູ້ເຮັດວຽກດັ່ງກ່າວ ຫາກກໍ່ຄວາມເສັຍຫາຍ ໃຫ້ແກ່ບຸກຄົນອື່ນ ຜູ້ທີ່ໄດ້ຮັບຜົນປະโຫຍດນັ້ນຈະເປັນຜູ້ຮັບຜິດຊອບຕໍ່ຄ່າເສັຍຫາຍ.

ຕົວຢ່າງ: ກ ໄດ້ຫາ **ຂ** ຂຶ້ນເອົາໝາກພ້າວ **ຂ** ຈຶ່ງໄດ້ຂຶ້ນກົກພ້າວຕາມການຮ້ອງຂໍ ແລະ ໄດ້ຕັດແຂງໝາກພ້າວ ເຮັດໃຫ້ໝາກພ້າວຕົກໄປໃສ່ລົດທີ່ກຳລັງແລ່ນຜ່ານມາ ເຮັດໃຫ້ແວ່ນລົດ ແຕກຕໍ່ຄວາມເສັຍຫາຍດັ່ງກ່າວເປັນຄວາມຮັບຜິດຊອບຂອງ **ກ**.

ໂດຍທົ່ວໄປ ຄວາມຮັບຜິດຊອບຄ່າເສັຍຫາຍຕົກເປັນຂອງຜູ້ໃຊ້ວຽກ ມີຄວາມເຂົ້າໃຈຄືຜູ້ໃຊ້ວຽກຮັບຜິດຊອບຄ່າເສັຍຫາຍຕາງຜູ້ຮັບໃຊ້ວຽກ. ເນື່ອງຈາກວ່າຜູ້ໃຊ້ວຽກໄດ້ສັ່ງ ຫຼື ມອບໝາຍໃຫ້ຜູ້ກ່ຽວເຮັດວຽກໃຫ້ຕົນ. ດັ່ງນັ້ນ, ຜູ້ຮັບໃຊ້ວຽກບໍ່ມີສິດທີ່ຈະກະທຳຢ່າງອື່ນ ນອກຈາກປະຕິບັດຕາມຄຳສັ່ງ ຫຼື ຕາມການມອບໝາຍຂອງຜູ້ໃຊ້ວຽກເທົ່ານັ້ນ. ອີກປະການໜຶ່ງຜົນປະโຫຍດແມ່ນຜູ້ໃຊ້ວຽກເປັນຜູ້ໄດ້ຮັບ ເມື່ອມີຄວາມເສັຍຫາຍເກີດຂຶ້ນ ຜູ້ໃຊ້ວຽກກໍຕ້ອງໄດ້ຮັບຜິດຊອບ.

ຜູ້ຮັບໃຊ້ວຽກ ໝາຍເຖິງຜູ້ປະຕິບັດວຽກງານໃດໜຶ່ງຕາມຄຳສັ່ງ ຫຼື ຕາມການມອບໝາຍ ຂອງຜູ້ໃຊ້ວຽກ. ຄວາມຮັບຜິດຊອບຂອງຜູ້ຮັບໃຊ້ວຽກຕໍ່ຄວາມເສັຍຫາຍ ທີ່ຕົນກໍ່ຂຶ້ນໃນເວລາປະຕິບັດໜ້າທີ່ ຖ້າຫາກຄວາມເສັຍຫາຍດັ່ງກ່າວແມ່ນເກີດຂຶ້ນຍ້ອນຄວາມຜິດອັນໜັກໜ່ວງຂອງຜູ້ກ່ຽວເອງ ຜູ້ຮັບໃຊ້ວຽກຈະຕ້ອງເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍດັ່ງກ່າວ ແຕ່ຜູ້ໃຊ້ວຽກນັ້ນຕ້ອງໄດ້ຈ່າຍຄ່າເສັຍຫາຍນັ້ນກ່ອນແລ້ວ ຈຶ່ງທວງເອົາການທົດແທນຄ່າເສັຍຫາຍທີ່ຕົນໄດ້ຈ່າຍໄປແລ້ວນັ້ນຄືນຈາກຜູ້ຮັບໃຊ້ວຽກ[16].

ຕົວຢ່າງ: ຄ ເປັນຫົວໜ້າບໍລິສັດຂົນສົ່ງໄດ້ມອບໝາຍໃຫ້ **ດ** ຂັບລົດບັນທຸກເຂົ້າສານ ເພື່ອໄປສົ່ງລູກຄ້າ ແຕ່ນະຄອນຫຼວງຈັນໄປແຂວງສາລະວັນ, ພໍລົດຮອດເຄິ່ງທາງ **ດ** ໄດ້ພາໝູ່ດື່ມເຫຼົ້າເມົາ ແລ້ວຂັບລົດໄປໄດ້ລະຍະໜຶ່ງຈຶ່ງເກີດອຸປະຕິເຫດ ເຂົ້າສານຖືກເສັຍຫາຍ ສອງ ໂຕນ ກຳລະນີນີ້ **ຄ** ຕ້ອງຮັບຜິດຊອບໃຊ້ແທນຄ່າເຂົ້າໃຫ້ເຈົ້າຂອງກ່ອນແລ້ວ ຈຶ່ງທວງໃຫ້ **ດ** ທົດແທນຄືນ ເພາະວ່າອຸປະຕິເຫດເກີດຂຶ້ນ ຍ້ອນຄວາມຜິດອັນໜັກໜ່ວງຂອງ **ດ**.

---

[16] ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕາ 92 ວັກ 2.

ກໍລະນີບຸກຄົນໃດໜຶ່ງຮັບຈ້າງເຮັດວຽກງານ ເຊັ່ນ ຊ່າງເຮືອນ, ຊ່າງໄມ້, ຊ່າງຈອດ, ຊ່າງຕີເຫຼັກ, ຄົນຂັບເຫົ້ກຊີ ຈະບໍ່ຖືວ່າເປັນຜູ້ຮັບใช้ວຽກຂອງຜູ້ວ່າຈ້ຳ ເພາະພວກກ່ຽວບໍ່ໄດ້ຢູ່ໃຕ້ການຄວບຄຸມຂອງຜູ້ວ່າຈ້ຳໃນເວລາປະຕິບັດວຽກງານ ແລະ ພວກກ່ຽວກໍປະຕິບັດງານນັ້ນໂດຍລຳພັງປາສະຈາກຄຳສັ່ງໃດໆ ແຕ່ພວກກ່ຽວຕ້ອງປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນໄວ້ເທົ່ານັ້ນ[17].

ຕົວຢ່າງ: **ອ** ເປັນຜູ້ຮັບເໝົ້ານ້ຳສ້າງເຮືອນ, ໃນເວລາຕັດໂຄງຫຼັງຄາ **ອ** ໄດ້ຈ້ຳງ **ທ** ນາຍຊ່າງຕັດຫຼັງຄາເປັນເງິນຈຳນວນ 20.000.000 ກີບ; ໃນເວລາ **ທ** ຕັດຫຼັງຄາເຮືອນຢູ່ນັ້ນ ໄດ້ເຮັດສິ້ນເຫຼັກຕົກໄປໃສ່ລົດຂອງ **ນ** ທີ່ຈອດຢູ່ເຮືອນທາງຂ້າງ ເຮັດໃຫ້ແວ່ນລົດແຕກ ຕໍ່ຄວາມເສັຍຫາຍດັ່ງກ່າວຈະເປັນຄວາມຮັບຜິດຊອບຂອງ **ທ** ເອງ.

ຜູ້ໃຊ້ວຽກຈະບໍ່ຮັບຜິດຊອບຕໍ່ຄວາມເສັຍຫາຍ ຫຼື ຄວາມເປັນອັນຕະລາຍທີ່ເກີດຂຶ້ນຈາກການກະທຳຂອງຜູ້ຮັບใช้ວຽກຂອງຕົນ ເມື່ອຜູ້ใช้ວຽກໄດ້ຕົກລົງໃຫ້ບຸກຄົນໃດໜຶ່ງຢືມຜູ້ຮັບใช้ວຽກຂອງຕົນໄປເຮັດວຽກ ຊຶ່ງເປັນວຽກຂອງຜູ້ຢືມ ເນື່ອງຈາກວ່າ ຜູ້ຮັບใช้ວຽກນັ້ນໄດ້ອອກຈາກການດູແລ ແລະ ການຄວບຄຸມຂອງຜູ້ກ່ຽວແລ້ວ. ຄວາມເສັຍຫາຍຈະຕົກເປັນຄວາມຮັບຜິດຊອບຂອງຜູ້ຢືມ.

2.2.3. ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ ແລະ ຜູ້ຄຸ້ມຄອງ

2.2.3.1. ຄວາມຮັບຜິດຊອບຂອງພໍ່ແມ່

ຄວາມຮັບຜິດຊອບຂອງພໍ່ແມ່ ໝາຍເຖິງ ຄວາມຮັບຜິດຊອບໃນການใช้ແທນຄ່າເສັຍຫາຍຂອງພໍ່ແມ່ຄົງ, ພໍ່ນ້ຳ ແມ່ນ້ຳ ແລະ ພໍ່ລ້ຽງແມ່ລ້ຽງ ຊຶ່ງລູກຂອງຕົນທີ່ຍັງບໍ່ເຖິງກະສຽນອາຍຸ ໄດ້ໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ.

ພໍ່ແມ່ຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ຈະເປັນຜູ້ຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເນື່ອງມາຈາກການກະທຳຂອງເດັກ ທີ່ຢູ່ພາຍໃຕ້ການຄຸ້ມຄອງລ້ຽງດູຂອງຕົນ. ການກະທຳຂອງເດັກທີ່ກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ແລ້ວມີການຮ້ອງຟ້ອງເພື່ອທວງເອົາການใช้ແທນຄ່າເສັຍຫາຍ ເຊັ່ນ ເດັກແກວ່ງກ້ອນຫີນໃສ່ກັນ, ເດັກເອົາໄມ້ແທງກັນ ຫຼື ທຳຮ້າຍຮ່າງກາຍບຸກຄົນອື່ນ, ເດັກຂັບຂີ່ລົດແລ້ວເກີດອຸປະຕິເຫດເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບ ຫຼື ເສັຍຊີວິດ, ເດັກເຮັດຊັບສິ່ງຂອງບຸກຄົນເປ່ເພ ຫຼື ເສັຍຫາຍ ແລະ ອື່ນໆ.

[17] ປຶ້ມ ຖາມ-ຕອບ ກົດໝາຍແພ່ງ ໂດຍກຸ່ມຄົ້ນຄວ້າກົດໝາຍແພ່ງ, ໜ້າ 116.

2.2.3.2. ຄວາມຮັບຜິດຊອບຂອງຜູ້ປົກຄອງ

ຄວາມຮັບຜິດຊອບຂອງຜູ້ປົກຄອງ ໝາຍເຖິງຜູ້ທີ່ມີຄວາມຮັບຜິດຊອບຕໍ່ຄ່າເສັຍຫາຍທີ່ເດັກ ຫຼື ຄົນເປັນບ້າເສັຍຈິດ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ໄດ້ກໍ່ຄວາມເສັຍຫາຍ ໃຫ້ກັບບຸກຄົນອື່ນ[18].

ຜູ້ປົກຄອງ ແມ່ນຜູ້ທີ່ມີຄວາມຮັບຜິດຊອບຄືກັນກັບພໍ່ແມ່ ຕໍ່ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ເຊັ່ນ ເດັກກຳພອຍ, ເດັກທີ່ຖືກປະລະ, ເດັກທີ່ຖືກປະຖິ້ມ, ເດັກທີ່ຕ້ອງການ ການປົກປ້ອງເປັນພິເສດ ຫຼື ຄົນເປັນບ້າເສັຍຈິດ ແລະ ອື່ນໆ[19].

ຜູ້ປົກຄອງ ຈະຖືກແຕ່ງຕັ້ງໃຫ້ຄຸ້ມຄອງເດັກທີ່ບໍ່ເຖິງກະສຽນອາຍຸ ຫຼື ຜູ້ເປັນບ້າເສັຍຈິດ ຕາມການແຕ່ງຕັ້ງຂອງນາຍບ້ານ ຫຼື ຕາມຄຳຕັດສິນຂອງສານ. ຜູ້ປົກຄອງຈະມີພັນທະເບິ່ງແຍງດູແລ ຜູ້ທີ່ຢູ່ພາຍໃຕ້ການປົກຄອງຂອງຕົນ, ຖ້າຜູ້ທີ່ຢູ່ພາຍໃຕ້ການປົກຄອງຂອງຕົນ ຫາກໄດ້ກໍ່ຄວາມເສັຍຫາຍແກ່ບຸກຄົນອື່ນ ຜູ້ປົກຄອງດັ່ງກ່າວຈະຕ້ອງເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ເກີດຂຶ້ນ.

ຕົວຢ່າງ: ກ ເປັນເດັກກຳພອຍ, **ຂ** ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງ **ກ**, ຕໍ່ມາ **ກ** ໄດ້ເອົາກ້ອນຫີນແກວ່ງໃສ່ **ງ** ເຮັດໃຫ້ **ງ** ຫົວແຕກ ໃນກໍລະນີນີ້ **ຂ** ຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ **ກ** ໄດ້ກໍ່ຂຶ້ນ ເຊັ່ນ ຄ່າປິ່ນປົວ, ຄ່າປົວແປງ, ຄ່າທຳຂວັນ.

ຕົວຢ່າງ: ຂ ເປັນຄົນບ້າເສັຍຈິດ, **ຄ** ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງ **ຂ**, ໃນວັນໜຶ່ງ **ຂ** ໄດ້ລັກອອກຈາກເຮືອນຂອງ **ຄ** ແລ້ວ ໄດ້ເອົາໄມ້ທຸບຕີລົດຂອງ **ງ** ເຮັດໃຫ້ລົດຂອງ **ງ** ເປ່ເພ. ໃນກໍລະນີນີ້ **ຄ** ຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ **ຂ** ໄດ້ກໍ່ຂຶ້ນ ເຊັ່ນ **ຄ** ຕ້ອງໄດ້ສ້ອມແປງລົດໃຫ້ແກ່ **ງ** ໃນຖານະເປັນຜູ້ປົກຄອງ **ຂ**.

2.2.3.3. ຄວາມຮັບຜິດຊອບຂອງຜູ້ຄຸ້ມຄອງ

ຜູ້ຄຸ້ມຄອງ ແມ່ນຜູ້ທີ່ເບິ່ງແຍງດູແລເດັກທີ່ບໍ່ເຖິງກະສຽນອາຍຸ ຫຼື ຜູ້ເປັນບ້າເສັຍຈິດໃນລະຍະເວລາໃດໜຶ່ງ ເຊັ່ນ ໂຮງຮຽນ, ໂຮງໝໍ, ສູນຝຶກອົບຮົມເດັກ, ສະຖານທີ່ກັກຂັງເດັກ ແລະ ອື່ນໆ. ຜູ້ຄຸ້ມຄອງຈະບໍ່ໄດ້ຮັບການແຕ່ງຕັ້ງ ແຕ່ມີພັນທະໃນການເບິ່ງແຍງດູແລເດັກ ຫຼື ຜູ້ເປັນບ້າເສັຍຈິດ ໃນເວລາທີ່ພວກກ່າງວຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ, ໃນກໍລະນີ ຜູ້ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຫາກໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ຜູ້ຄຸ້ມຄອງຈະເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍດັ່ງກ່າວ.

---

[18] ກົດໝາຍ ວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປັບປຸງ ປີ 2008, ມາດຕ 93.

[19] ກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ປີ 2006, ມາດຕາ 2 ຂໍ້ 13.

ຕົວຢ່າງ: ສ ເປັນລູກຂອງ **ລ** ມີອາຍຸ ສິບ ປີ ໄດ້ເຂົ້າໂຮງຮຽນແຫ່ງໜຶ່ງ, ໃນເວລາພັກຜ່ອນຊົ່ວໂມງຮຽນ **ສ** ໄດ້ເກີດຜິດຖຽງກັບໝູ່ **ສ** ໄດ້ເອົາໄມ້ຕີແຂນ ຂອງ **ງ** ເຮັດໃຫ້ແຂນຂອງ **ງ** ຫັກ ຕໍ່ຄ່າເສັຍຫາຍດັ່ງກ່າວ ທາງໂຮງຮຽນທີ່ເປັນຜູ້ຄຸ້ມຄອງ ຈະຕ້ອງເປັນຜູ້ຮັບຜິດຊອບ.

ຕົວຢ່າງ: **ງ** ເປັນຄົນເສັຍຈິດກຳລັງຖືກປິ່ນປົວຢູ່ໂຮງໝໍ, ມື້ໜຶ່ງ **ງ** ໄດ້ລັກອອກຈາກໂຮງໝໍແລ້ວ ໄດ້ທຳລາຍຊັບສິ່ງຂອງ ຂອງບຸກຄົນອື່ນໄດ້ຮັບຄວາມເສັຍຫາຍຕໍ່ຄ່າເສັຍຫາຍດັ່ງກ່າວທາງໂຮງໝໍທີ່ເປັນຜູ້ຄຸ້ມຄອງຈະຕ້ອງເປັນຜູ້ຮັບຜິດຊອບ.

2.3. ຄວາມຮັບຜິດຊອບທີ່ເນື່ອງມາຈາກສັດ

2.3.1. ຄວາມໝາຍ

ຄວາມຮັບຜິດຊອບ ທີ່ເນື່ອງມາຈາກສັດກໍ່ຂຶ້ນ ໝາຍເຖິງ ຄວາມຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງສັດທີ່ຮັກສາລ້ຽງດູສັດ ຖ້າຫາກສັດຂອງຕົນໄດ້ໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ເຊັ່ນ ສັດທຳຮ້າຍຮ່າງກາຍຄົນ, ທຳລາຍຜົນລະປູກ ແລະ ອື່ນໆ.

2.3.2. ເຈົ້າຂອງ ຫຼື ຜູ້ຄຸ້ມຄອງສັດ

ເຈົ້າຂອງສັດ ໝາຍເຖິງ ຜູ້ທີ່ມີກຳມະສິດຕໍ່ສັດລ້ຽງ ເຊັ່ນ ຊ້າງ, ງົວ, ຄວາຍ, ໝາ, ໝູ, ແບ້ ແລະ ອື່ນໆ.

ຜູ້ຄຸ້ມຄອງສັດ ໝາຍເຖິງ ຜູ້ທີ່ຄຸ້ມຄອງຮັກສາ ຫຼື ດູແລສັດ ທີ່ບໍ່ແມ່ນເຈົ້າຂອງ ເຊັ່ນ ຜູ້ຮັບລ້ຽງ, ຜູ້ຖືກມອບໝາຍໃຫ້ລ້ຽງ, ຜູ້ຢືມສັດໄປໃຊ້ ຫຼື ສັດຕະວະແພດ.

2.3.3. ຄວາມເສັຍຫາຍທີ່ເກີດຂຶ້ນຈາກສັດ

ຄວາມເສັຍຫາຍທີ່ເກີດຂຶ້ນຈາກສັດ ອາດແມ່ນຄວາມເສັຍຫາຍທາງດ້ານຊີວິດ, ສຸຂະພາບ, ຄວາມເສັຍຫາຍທາງດ້ານວັດຖຸສິ່ງຂອງ ແລະ ຄວາມເສັຍຫາຍທາງດ້ານຜົນລະປູກ ເຊັ່ນ ສັດໄດ້ຊົນ ຫຼື ກັດບຸກຄົນໃດໜຶ່ງເຮັດໃຫ້ໄດ້ຮັບບາດເຈັບ ຫຼື ເສັຍຊີວິດ, ໄປທຳລາຍວັດຖຸສິ່ງຂອງ ຂອງບຸກຄົນໃດໜຶ່ງ ໄດ້ຮັບຄວາມເສັຍຫາຍ ຫຼື ເປ່ເພ ແລະ ເຂົ້າສວນ ຫຼື ໄຮ່ນາ ໄປກິນເຄື່ອງປູກຝັງຂອງບຸກຄົນອື່ນ. ຄວາມເສັຍຫາຍດັ່ງກ່າວ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງສັດ ເປັນຜູ້ທີ່ມີຄວາມຮັບຜິດຊອບ.

2.3.4. ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງສັດ

ຕາມມາດຕາ 94 ກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ກຳນົດ "ເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ສັດນັ້ນໄດ້ກໍ່ຂຶ້ນ ຍ້ອນຄວາມຜິດຂອງເຈົ້າຂອງ ຫຼື ຜູ້ຄອບຄອງສັດນັ້ນ".

ໃນກໍລະນີສັດຂອງຕົນ ຫຼື ຢູ່ໃນການຄຸ້ມຄອງຂອງຕົນ ຫາກໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ເຈົ້າຂອງສັດ ຫຼື ຜູ້ຄຸ້ມຄອງສັດຈະຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ເຊັ່ນ ເຈົ້າຂອງສັດລ້ຽງຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍ ເມື່ອສັດລ້ຽງຂອງຕົນເຂົ້າໄປຢຽບ, ກິນຜົນລະປູກຂອງບຸກຄົນອື່ນ, ໄປທຳຮ້າຍບຸກຄົນອື່ນເຮັດໃຫ້ໄດ້ຮັບບາດເຈັບ ຫຼື ເສັຍຊີວິດ ຍົກເວັ້ນມີການພິສູດໄດ້ວ່າເຈົ້າຂອງສັດລ້ຽງ ຫຼື ຜູ້ຄຸ້ມຄອງໄດ້ຮັກສາ ຫຼື ໄດ້ໃຊ້ຄວາມລະມັດລະວັງໃນການ ຄຸ້ມຄອງ ແລະ ປ້ອງກັນສັດດັ່ງກ່າວເປັນຢ່າງດີແລ້ວ ເຊັ່ນ ສັດຖືກມັດໄວ້ ຫຼື ຂັງໄວ້ແລ້ວ ແຕ່ຜູ້ຖືກເສັຍຫາຍເປັນຜູ້ເຂົ້າໄປໃນຂອບເຂດດັ່ງກ່າວ ພ້ອມທັງກໍ່ກວນ ຈຶ່ງເຮັດໃຫ້ສັດລ້ຽງທຳຮ້າຍເຈົ້າຂອງສັດລ້ຽງຈະບໍ່ມີຄວາມຮັບຜິດຊອບຕໍ່ຄ່າເສັຍຫາຍ.

ຕົວຢ່າງ: ໝາຂອງ **ກ** ໄດ້ແລ່ນອອກໄປນອກເຮືອນ ແລະ ໄປກັດ **ຂ**, **ກ** ຕ້ອງໄດ້ຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນ.

ຕົວຢ່າງ: ກ ໄດ້ມັດຄວາຍຂອງຜູ່ກ່ຽວໄວ້ໃນຄອກທີ່ດີແລ້ວ ແຕ່ **ຂ** ໄດ້ເຂົ້າໄປກວນຄວາຍ ຈຶ່ງຖືກຄວາຍຊົນເຮັດໃຫ້ໄດ້ຮັບບາດເຈັບ, ໃນກໍລະນີດັ່ງກ່າວນີ້ **ກ** ຈະບໍ່ມີຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນ.

ໃນກໍລະນີທີ່ຜູ້ເປັນເຈົ້າຂອງ ຫາກໄດ້ມອບສັດລ້ຽງຂອງຕົນໃຫ້ແກ່ບຸກຄົນອື່ນ ເປັນຜູ້ປົກປັກຮັກສາລ້ຽງດູ ໂດຍມີຄ່າຕອບແທນ ຫຼື ບໍ່ມີຄ່າຕອບແທນ ເຊັ່ນ ການເຊົ່າຄວາຍເພື່ອເອົາໄປໄຖນາ ຖ້າຄວາຍໂຕດັ່ງກ່າວຫາກໄດ້ໄປກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ຕໍ່ຄວາມເສັຍຫາຍດັ່ງກ່າວ ຜູ້ຄຸ້ມຄອງ ຫຼື ຜູ້ປົກປັກຮັກສາເປັນຜູ້ຮັບຜິດຊອບ.

ຕົວຢ່າງ: ກ ໃຫ້ **ຂ** ເຊົ່າຄວາຍຂອງຕົນເພື່ອເອົາໄປໄຖນາ, ໃນລະຍະທີ່ **ຂ** ເຊົ່າຄວາຍນັ້ນຄວາຍໄດ້ໄປກິນຜົນລະປູກຂອງຄົນອື່ນ ຕໍ່ຄວາມເສັຍຫາຍດັ່ງກ່າວ **ຂ** ຕ້ອງເປັນຜູ້ຮັບຜິດຊອບໃຊ້ແທນ.

2.4. ຄວາມຮັບຜິດຊອບທີ່ເນື່ອງມາຈາກວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນ

2.4.1. ຄວາມໝາຍ

ຄວາມຮັບຜິດຊອບ ທີ່ເນື່ອງມາຈາກວັດຖຸສິ່ງຂອງທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນໝາຍເຖິງ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງດັ່ງກ່າວ ຍ້ອນຄວາມຜິດຂອງພວກກ່ຽວເອງ.

2.4.2. ເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ

ເຈົ້າຂອງວັດຖຸສິ່ງຂອງ ໝາຍເຖິງ ຜູ້ທີ່ມີກຳມະສິດຕໍ່ວັດຖຸສິ່ງຂອງໃດໜຶ່ງ ເຊັ່ນ ລົດ, ເຮືອ, ຕົ້ນໄມ້, ປືນ, ທາດເຄມີ ແລະ ອື່ນໆ.

ຜູ້ຄຸ້ມຄອງວັດຖຸສິ່ງຂອງ ໝາຍເຖິງ ຜູ້ທີ່ຄຸ້ມຄອງຮັກສາ, ດູແລວັດຖຸສິ່ງຂອງ ທີ່ບໍ່ແມ່ນກຳມະສິດຂອງຕົນ ເຊັ່ນ ຜູ້ປົກປັກຮັກສາ, ຜູ້ຢືມວັດຖຸສິ່ງຂອງໄປໃຊ້.

2.4.3. ຄວາມເສັຍຫາຍທີ່ເກີດຈາກວັດຖຸສິ່ງຂອງ

ຄວາມເສັຍຫາຍ ທີ່ເກີດຂຶ້ນຈາກວັດຖຸສິ່ງຂອງ ອາດແມ່ນຄວາມເສັຍຫາຍທາງດ້ານຊີວິດ, ສຸຂະພາບ, ຄວາມເສັຍຫາຍທາງດ້ານວັດຖຸສິ່ງຂອງ ເຊັ່ນ ການຮົ່ວໄຫຼຂອງເຄມີ, ງ່າໄມ້ຫັກໃສ່ຄົນ, ສັດ ຫຼື ວັດຖຸສິ່ງຂອງ ເຮັດໃຫ້ບຸກຄົນໃດໜຶ່ງໄດ້ຮັບບາດເຈັບ ຫຼື ເສັຍຊີວິດ, ວັດຖຸສິ່ງຂອງ ຂອງບຸກຄົນໃດໜຶ່ງໄດ້ຮັບຄວາມເສັຍຫາຍ ຫຼື ເປ່ເພ. ຄວາມເສັຍທີ່ເກີດຈາກເຫດການທີ່ກ່າວມານັ້ນ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ ຕ້ອງມີຄວາມຮັບຜິດຊອບໃນການໃຊ້ແທນ.

2.4.4. ຄວາມຮັບຜິດຊອບຂອງເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ

ມາດຕາ 95 ກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ກຳນົດວ່າ "ຄວາມເສັຍຫາຍທີ່ເກີດຈາກວັດຖຸສິ່ງຂອງໃດໜຶ່ງ ຍ້ອນຄວາມຜິດຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງນັ້ນຜູ່ກ່ຽວຕ້ອງໄດ້ຮັບຜິດຊອບ ໃຊ້ແທນຄ່າເສັຍຫາຍດັ່ງກ່າວ."

ຜູ້ເປັນເຈົ້າຂອງວັດຖຸສິ່ງຂອງໃດໜຶ່ງ ຈະຕ້ອງໄດ້ປົກປັກຮັກສາວັດຖຸສິ່ງຂອງທີ່ຢູ່ໃນການຄຸ້ມຄອງຂອງຕົນໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ຮົ່ວໄຫຼ ຫຼື ບໍ່ໃຫ້ເກີດເຫດການໃດໜຶ່ງ ທີ່ຈະເປັນອັນຕະລາຍ ຫຼື ສ້າງຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ. ໃນກໍລະນີ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງວັດຖຸສິ່ງຂອງ ຂາດຄວາມເອົາໃຈໃສ່ໃນການປົກປັກຮັກສາວັດຖຸສິ່ງຂອງນັ້ນໃຫ້ຢູ່ໃນສະພາບທີ່ດີ ຖ້າວັດຖຸສິ່ງຂອງນັ້ນຫາກໄດ້ເຮັດໃຫ້ມີຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ຫຼື ຊັບສິ່ງຂອງບຸກຄົນອື່ນແລ້ວ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄຸ້ມຄອງຈະຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສັຍຫາຍທີ່ເກີດຂຶ້ນ.

ຕົວຢ່າງ: ຢູ່ເຮືອນຂອງ **ກ** ມີຕົ້ນໄມ້ທີ່ມີງ່າເດ່ໄປຫາຫົນທາງ ແລະ ງ່າດັ່ງກ່າວເກີດແຫ້ງຕາຍ ແຕ່ຜູ້ເປັນເຈົ້າຂອງກໍບໍ່ໄດ້ເອົາໃຈໃສ່ ຫຼື ຕັດອອກ ເຮັດໃຫ້ງ່າໄມ້ຫັກລົງຖືກລົດທີ່ແລ່ນມາຕາມທາງເຮັດໃຫ້ຜູ້ຂັບຂີ່ລົດໄດ້ຮັບບາດເຈັບ ແລະ ລົດເປ່ເພ, ຕໍ່ຄວາມເສັຍຫາຍດັ່ງກ່າວ **ກ** ຜູ້ເປັນເຈົ້າຂອງຕົ້ນໄມ້ຈະຕ້ອງຮັບຜິດຊອບ.

ຕົວຢ່າງ: ສວນຂອງ **ກ** ມີນ້ຳສ້າງ ຊຶ່ງໄດ້ລ້ອມຮົ້ວ ແລະ ປົກປິດປາກນ້ຳສ້າງເປັນຢ່າງດີ, ມື້ໜຶ່ງໄດ້ມີຄວາຍຂອງ **ຂ** ບຸຮົ້ວສວນເຂົ້າໄປແລ້ວຕົກລົງນ້ຳສ້າງເຮັດໃຫ້ຄວາຍຕາຍ ໃນກໍລະນີນີ້ **ກ** ບໍ່ມີຄວາມຮັບຜິດຊອບຕໍ່ຄວາມເສັຍຫາຍດັ່ງກ່າວ ເພາະຜູ່ກ່ຽວໄດ້ປ້ອງກັນເປັນຢ່າງດີແລ້ວ.

ໃນກໍລະນີ ຖ້າເຈົ້າຂອງລົດຫາກມອບລົດໃຫ້ຜູ້ອື່ນປົກປັກຮັກສາ, ຄຸ້ມຄອງນັບແຕ່ເວລາມອບລົດເປັນຕົ້ນໄປ ຄວາມຮັບຜິດຊອບທັງໝົດແມ່ນຕົກຢູ່ນຳຜູ້ຄຸ້ມຄອງ ແລະ ນຳໃຊ້ ເຊັ່ນ ຖ້າເກີດອຸປະຕິ

ເຫດ ແລະ ສ້າງຄວາມເສັຍໃຫ້ບຸກຄົນອື່ນແລ້ວ ຜູ້ຄຸ້ມຄອງ ຫຼື ຜູ້ເຊົ່າ ຈະມີຄວາມຮັບຜິດຊອບຕໍ່ ຄວາມເສັຍຫາຍທີ່ເກີດຂຶ້ນ.

3. ການເຮັດວຽກງານແທນຜູ້ອື່ນ

3.1. ຄວາມໝາຍຂອງການເຮັດວຽກງານແທນຜູ້ອື່ນ

ການເຮັດວຽກງານແທນຜູ້ອື່ນ ແມ່ນບຸກຄົນໃດໜຶ່ງທີ່ໄດ້ດຳເນີນວຽກງານໃດໜຶ່ງແທນ ເພື່ອຜົນປະໂຫຍດຂອງຜູ້ອື່ນ ໂດຍບໍ່ໄດ້ຮັບມອບໝາຍ. ອີງຕາມກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ມາດຕາ 96 “ການເຮັດວຽກງານແທນຜູ້ອື່ນແມ່ນ ການທີ່ຜູ້ເຮັດວຽກງານແທນ ໄດ້ດຳເນີນວຽກງານໃດໜຶ່ງ ເພື່ອຜົນປະໂຫຍດຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການມອບໝາຍຈາກບຸກຄົນນັ້ນ ເຊັ່ນ ການສ້ອມແປງເຮືອນໃຫ້ຜູ້ອື່ນ ໃນເວລາເຈົ້າຂອງເຮືອນບໍ່ຢູ່ ແລະ ອື່ນໆ”.

ເປົ້າໝາຍຂອງການເຮັດວຽກງານແທນຜູ້ອື່ນ ອາດຈະແມ່ນການເຄື່ອນໄຫວທາງດ້ານກົດໝາຍ ເຊັ່ນ ການໃຊ້ໜີ້ສິນແທນ ຫຼື ການເຄື່ອນໄຫວທາງດ້ານວັດຖຸ ເຊັ່ນ ການສ້ອມແປງເຮືອນແທນ.

ການເຮັດວຽກງານແທນຜູ້ອື່ນ ແມ່ນການຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນສັງຄົມ ຊຶ່ງບຸກຄົນໃດໜຶ່ງໄດ້ເຂົ້າໄປປະຕິບັດວຽກງານຂອງຜູ້ອື່ນດ້ວຍຄວາມສະໝັກໃຈ ໂດຍບໍ່ຫວັງຜົນຕອບແທນ ແຕ່ຕ້ອງດຳເນີນໄປດ້ວຍເຈດຕະນາດີ ແລະ ເພື່ອຜົນປະໂຫຍດຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ.

ການເຮັດວຽກງານແທນຜູ້ອື່ນ ແມ່ນເກີດຂຶ້ນຍ້ອນສະພາບແວດລ້ອມທີ່ບໍ່ສາມາດຕິດຕໍ່ພົວພັນເຖິງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງໄດ້ ແຕ່ເຖິງຢ່າງໃດກໍຕາມ ເມື່ອຜູ້ກ່ຽວກັບມາ ຜູ້ປະຕິບັດວຽກງານແທນຕ້ອງໄດ້ມອບວຽກງານ ຫຼື ຜົນປະໂຫຍດທີ່ໄດ້ເຮັດໄປແລ້ວນັ້ນ ໃຫ້ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ໃນກໍລະນີຜູ້ເຮັດວຽກງານແທນ ຫາກມີການໃຊ້ຈ່າຍກ່ອນ ກໍມີສິດໃນການທວງເອົາການທົດແທນຄ່າໃຊ້ຈ່າຍ ແລະ ອື່ນໆຢ່າງຄົບຖ້ວນ.

3.2. ເງື່ອນໄຂຂອງການເຮັດວຽກງານແທນຜູ້ອື່ນ

3.2.1. ການເຮັດວຽກງານຂອງຜູ້ອື່ນ

ການເຮັດວຽກງານຂອງຜູ້ອື່ນ ແມ່ນບຸນຄົນໃດໜຶ່ງໄດ້ເຂົ້າເຮັດວຽກງານຂອງບຸກຄົນອື່ນ ໂດຍວຽກງານນັ້ນບໍ່ແມ່ນວຽກງານຂອງຕົນ. ການເຂົ້າໄປເຮັດວຽກງານດັ່ງກ່າວເນື່ອງຈາກຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງບໍ່ຢູ່ ຊຶ່ງໃນຂະນະນັ້ນຜູ້ເຮັດວຽກງານແທນບໍ່ສາມາດຕິດຕໍ່ ຫຼື ແຈ້ງໃຫ້ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຊາບໄດ້.

3.2.2. ການບໍ່ໄດ້ຮັບມອບໝາຍ

ການບໍ່ໄດ້ຮັບມອບໝາຍ ໝາຍເຖິງບຸກຄົນໃດໜຶ່ງທີ່ເຂົ້າໄປເຮັດວຽກງານແທນນັ້ນ ບໍ່ໄດ້ຮັບມອບໝາຍຈາກຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ.

ໃນກໍລະນີທີ່ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຫາກຍັງຢູ່ກັບທີ່ນັ້ນ ການເຂົ້າເຮັດວຽກງານແທນຈະດຳເນີນໄດ້ກໍຕໍ່ເມື່ອໄດ້ຮັບຄວາມເຫັນດີຈາກຜູ້ກ່ຽວເສັຍກ່ອນ.

3.2.3. ເຈດຕະນາດີໃນການເຮັດວຽກງານແທນຜູ້ອື່ນ

ເຈດຕະນາດີໃນການເຮັດວຽກງານແທນຜູ້ອື່ນ ໝາຍເຖິງຜູ້ເຮັດວຽກງານແທນຜູ້ອື່ນມີຄວາມສະໝັກໃຈ, ຈິງໃຈ, ບໍລິສຸດໃຈ ແລະ ບໍ່ຫວັງຜົນປະໂຫຍດ ແລະ ຮັບຮູ້ວ່າວຽກທີ່ຕົນເຮັດນັ້ນເປັນວຽກ ແລະ ຜົນປະ�โຫຍດຂອງຜູ້ອື່ນ.

3.2.4. ເພື່ອຜົນປະໂຫຍດຂອງຜູ້ອື່ນ

ການເຮັດວຽກງານເພື່ອຜົນປະໂຫຍດຂອງຜູ້ອື່ນ ຕ້ອງເຮັດວຽກນັ້ນຄືກັບຕົນເອງເປັນເຈົ້າຂອງ, ເພື່ອຜົນປະໂຫຍດຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ແລະ ໃຫ້ສອດຄ່ອງຕາມເຈດຕະນາ ຫຼື ສັນນິຖານໄດ້ວ່າເປັນຄວາມປະສົງຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ[20].

ຕົວຢ່າງ: ກ ເຫັນທໍ່ນ້ຳປະປາແຕກ ຖ້າບໍ່ມີການສ້ອມແປງກໍຈະເຮັດໃຫ້ນ້ຳຮົ່ວໄຫຼ ຊຶ່ງຈະເຮັດໃຫ້ **ຂ** ໄດ້ຮັບຄວາມເສັຍຫາຍ, ເມື່ອເຫັນເຫດການເຊັ່ນນັ້ນ **ກ** ໄດ້ໂທແຈ້ງໃຫ້ **ຂ** ກ່ຽວກັບທໍ່ນ້ຳແຕກ ແຕ່ກໍບໍ່ສາມາດຕິດຕໍ່ໄດ້ **ກ** ຈຶ່ງໄດ້ເຂົ້າໄປສ້ອມແປງທໍ່ນ້ຳໃຫ້ **ຂ**.

ຕົວຢ່າງ: ກ ໄດ້ກູ້ຢືມເງິນຈຳນວນ 50.000.000 ກີບ ນຳທະນາຄານ **ຂ** ແລະ ໄດ້ເອົາທີ່ດິນ ແລະ ເຮືອນເປັນຫຼັກຊັບຄ້ຳປະກັນ ກຳນົດເວລາຂອງການກູ້ຢືມແມ່ນໜຶ່ງປີ, ດອກເບັ້ຍ 10% ຕໍ່ປີ. ພາຍຫຼັງກູ້ຢືມໄດ້ຫົກເດືອນ **ກ** ໄດ້ໄປຮຽນຕໍ່ຕ່າງປະເທດສາມປີ. ພໍຮອດກຳນົດເວລາໃຊ້ແທນໜີ້ສິນ ທະນາຄານໄດ້ມາຫວງໜີ້ນຳ **ກ** ຈຶ່ງຮູ້ວ່າ **ກ** ບໍ່ຢູ່ທະນາຄານ ຈຶ່ງໄດ້ແຈ້ງຕໍ່ອົງການປົກຄອງທີ່ກ່ຽວຂ້ອງ ຈະເອົາທີ່ດິນ ແລະ ເຮືອນດັ່ງກ່າວປະກາດຂາຍ ເພື່ອນຳເງິນມາຊຳລະໜີ້ສິນ. **ຄ** ຢູ່ເຮືອນໃກ້ກັບ **ກ** ຈຶ່ງໄດ້ໃຊ້ໜີ້ສິນແທນ **ກ** ໃຫ້ທະນາຄານ ເພື່ອບໍ່ໃຫ້ທະນາຄານໄດ້ຍຶດເຮືອນຂອງ **ຂ** ໄປຂາຍ.

ຕົວຢ່າງ: ຢູ່ໜ້າເຮືອນໃກ້ຄຽງຂອງ **ກ** ມີຂີ້ເຫຍື້ອກອງໄວ້, ເມື່ອເຖິງເວລາລົດເກັບຂີ້ເຫຍື້ອມາເກັບ ເຈົ້າຂອງເຮືອນບໍ່ຢູ່ **ກ** ເຫັນວ່າຖ້າບໍ່ໃຫ້ລົດເກັບຂີ້ເຫຍື້ອເອົາໄປກໍຈະມີກິ່ນເໝັນ ແລະ ເຮັດໃຫ້ສິ່ງ

[20] ປະມວນກົດໝາຍແພ່ງ ແລະ ພານິດ ຂອງໄທ ສະບັບທີ 19 ປີ ພສ 2551, ມາດຕາ 395

ແວດລ້ອມບໍດີ ດັ່ງນັ້ນ, ລາວຈຶ່ງບອກໃຫ້ລົດເອົາຂີ້ເຫຍື້ອໄປຖິ້ມ ພ້ອມທັງຈ່າຍເງິນຄ່າຖິ້ມຂີ້ເຫຍື້ອໃຫ້ກ່ອນ.

3.3. ຜົນຂອງການເຮັດວຽກງານແທນຜູ້ອື່ນ

3.3.1. ຜົນສຳລັບຜູ້ເຮັດວຽກງານແທນຜູ້ອື່ນ

3.3.1.1. ພັນທະໃນການສືບຕໍ່ປະຕິບັດວຽກງານແທນຜູ້ອື່ນ

ຜູ້ເຮັດວຽກງານແທນຜູ້ອື່ນ ໃນເມື່ອເລີ່ມດຳເນີນວຽກງານໃດໜຶ່ງແທນຜູ້ອື່ນແລ້ວ ຜູ້ກ່ຽວຕ້ອງສືບຕໍ່ເຮັດວຽກງານນັ້ນໃຫ້ສຳເລັດ ຫຼື ຈົນກວ່າຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ມີຄວາມສາມາດສືບຕໍ່ດຳເນີນວຽກງານນັ້ນເອງໄດ້.

3.3.1.2. ພັນທະໃນການສົ່ງມອບວຽກງານ, ຊັບສົ່ງຂອງ ຫຼື ເອກະສານ

ຜູ້ເຮັດວຽກງານແທນຜູ້ອື່ນ ເມື່ອເຫັນວ່າຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງມີຄວາມສາມາດໃນການດຳເນີນເອງໄດ້ ຕ້ອງສົ່ງມອບວຽກງານ, ຊັບສົ່ງຂອງ, ເງິນ ຫຼື ເອກະສານ ທີ່ໄດ້ຮັບຈາກການເຮັດວຽກງານແທນນັ້ນໃຫ້ຜູ້ກ່ຽວ.

3.3.1.3. ພັນທະໃນການລາຍງານ

ຜູ້ເຮັດວຽກງານແທນຜູ້ອື່ນ ໃນໄລຍະດຳເນີນວຽກງານ ຫຼື ພາຍຫຼັງສຳເລັດການເຮັດວຽກງານແທນແລ້ວ ຖ້າມີເງື່ອນໄຂ ຫຼື ສາມາດຕິດຕໍ່ໄດ້ຕ້ອງແຈ້ງ ຫຼື ລາຍງານຜົນຂອງການເຮັດວຽກຂອງຕົນໃຫ້ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ.

3.3.1.4. ພັນທະໃນການໃຊ້ແທນຄ່າເສັຍຫາຍ

ໃນກໍລະນີຜູ້ເຮັດວຽກງານແທນຜູ້ອື່ນ ຫາກໄດ້ດຳເນີນວຽກງານໃດໜຶ່ງເກີນຂອບເຂດ ຫຼື ຫາກພິສູດໄດ້ວ່າວຽກງານດັ່ງກ່າວບໍ່ສອດຄ່ອງກັບຈຸດປະສົງຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ຫຼື ໄດ້ສ້າງຄວາມເສັຍຫາຍ, ຜູ້ເຮັດວຽກແທນຕ້ອງຮັບຜິດຊອບເອງຕໍ່ວຽກ ງານທີ່ຕົນເຮັດນັ້ນ ຫຼື ໃຊ້ແທນຄ່າເສັຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

3.3.2. ຜົນສຳລັບຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ

3.3.2.1. ພັນທະຮັບເອົາຜົນປະໂຫຍດ

ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ມີພັນທະຮັບເອົາວຽກງານ, ຊັບສົ່ງຂອງ, ເງິນ ຫຼື ເອກະສານທີ່ຜູ້ເຮັດວຽກງານແທນນັ້ນໄດ້ປະຕິບັດໄປແລ້ວ.

3.3.2.2. ພັນທະທົດແທນຄ່າໃຊ້ຈ່າຍ

ກໍລະນີຜູ້ເຮັດວຽກງານແທນຜູ້ອື່ນ ໄດ້ດຳເນີນວຽກງານເພື່ອຜົນປະ�โຫຍດ ແລະ ສອດຄ່ອງກັບເຈດຕະນາຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງແລ້ວ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຕ້ອງທົດແທນຄ່າໃຊ້ຈ່າຍທີ່ຜູ້ເຮັດວຽກງານແທນໄດ້ຈ່າຍເຂົ້າໃນການເຮັດວຽກງານນັ້ນ ເນື່ອງຈາກວ່າ ການເຮັດວຽກງານແທນນັ້ນແມ່ນຍ້ອນມີເຈດຕະນາດີ ແລະ ເພື່ອຜົນປະ�โຫຍດໃຫ້ແກ່ຜູ້ເຈົ້າຂອງ ຫຼື ຜູ້ຄອບຄອງ.

3.4. ການສິ້ນສຸດການເຮັດວຽກແທນຜູ້ອື່ນ

ການເຮັດວຽກແທນຜູ້ອື່ນ ແມ່ນຄືກັນກັບການປະຕິບັດການມອບໝາຍຕ່າງໆ ຈະສິ້ນສຸດລົງ ກໍລະນີດັ່ງນີ້:

- ໄດ້ປະຕິວັດວຽກງານຂອງຕົນສຳເລັດ ໂດຍໄດ້ສົ່ງມອບວຽກ ແລະ ຜົນປະ�โຫຍດໃຫ້ຜູ້ເປັນເຈົ້າຂອງ ຫລື ຜູ້ຄອບຄອງ;
- ໄດ້ຮັບການທົດແທນຄ່າໃຊ້ຈ່າຍ, ໜີ້ສິນ ແລະ ຄ່າເສັຍຫາຍຢ່າງຄົບຖ້ວນ;
- ເຈົ້າຂອງ ຫຼື ຜູ້ຄອບຄອງບອກໃຫ້ຢຸດເຊົາ
- ຜູ້ເຮັດວຽກງານແທນຜູ້ອື່ນບໍ່ສາມາດສືບຕໍ່ປະຕິບັດວຽກງານນັ້ນໄດ້ໂດຍມີເຫດການອັນຈຳເປັນ ຫຼື ຜູ້ເຮັດວຽກງານແທນເສັຍຊີວິດ[21].

4. ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ

4.1. ຄວາມໝາຍຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ

ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ ໝາຍເຖິງການໄດ້ຮັບຊັບສິ່ງຂອງ ຂອງບຸກຄົນອື່ນມາເປັນຂອງຕົນໂດຍບໍ່ມີພື້ນຖານຖືກຕ້ອງຕາມກົດໝາຍ ຊຶ່ງອາດຈະໄດ້ມາໂດຍເຈດຕະນາ ຫຼື ດ້ວຍຄວາມຫຼົງຜິດກໍຕາມ ແຕ່ຜູ້ກ່ຽວຕ້ອງສົ່ງຊັບສິ່ງຂອງນັ້ນຄືນໃຫ້ຜູ້ເປັນເຈົ້າຂອງ ທັງນີ້ແມ່ນເພື່ອປົກປ້ອງຜົນປະ�โຫຍດຂອງຜູ້ເປັນເຈົ້າຂອງຊັບສິ່ງຂອງນັ້ນ.

ຕົວຢ່າງ: ກ ເຂົ້າໃຈຜິດວ່າ�โທລະສັບມືຖືທີ່ວາງໄວ້ຢູ່ໜ້າ�โຕະແມ່ນຂອງ **ຂ** ຈຶ່ງເອົາໄປໃຫ້ **ຂ** ແຕ່ໃນຕົວຈິງ�โທລະສັບມືຖືດັ່ງກ່າວແມ່ນຂອງ **ຄ**. ກໍລະນີນີ້ **ຂ** ຕ້ອງສົ່ງ�โທລະສັບຄືນໃຫ້ເຈົ້າຂອງເດີມ ຍ້ອນ **ຂ** ບໍ່ມີສິດເອົາຊັບສິ່ງຂອງດັ່ງກ່າວມາເປັນຂອງຕົນ.

[21] ປະມວນກົດໝາຍແພ່ງ ສສ ຫວຽດນາມ ປີ 2005, ມາດຕາ 598.

ຕົວຢ່າງ: ກ ໄດ້ສັ່ງຊື້ໂທລະສັບນຳ **ຂ** ພ້ອມທັງຈ່າຍເງິນໃຫ້ **ຂ** ແລ້ວ ເມື່ອຮອດກຳນົດເວລາ **ຂ** ບໍ່ສົ່ງມອບໂທລະສັບໃຫ້ **ກ** ຕາມການຕົກລົງກັນ. **ກ** ຈຶ່ງຍົກເລີກສັນຍາແລ້ວທວງເອົາເງິນຄືນ. ກໍລະນີນີ້ຖືວ່າ **ຂ** ໄດ້ຮັບເງິນໂດຍບໍ່ມີພື້ນຖານຖືກຕ້ອງ ແລະ **ຂ** ຕ້ອງສົ່ງເງິນຄືນໃຫ້ **ກ**.

4.2. ເງື່ອນໄຂຂອງການຮັບຊັບສົ່ງຂອງທີ່ຕົນບໍ່ມີສິດ

ບຸກຄົນໃດໜຶ່ງຈະຮຽກຮ້ອງໃຫ້ຜູ້ທີ່ໄດ້ຮັບຊັບສົ່ງຂອງສົ່ງຄືນຊັບດັ່ງກ່າວໃຫ້ແກ່ຕົນໄດ້ໃນຂໍ້ອ້າງວ່າ ເປັນການຮັບຊັບສົ່ງຂອງທີ່ຕົນບໍ່ມີສິດ ຕ້ອງມີ ສີ່ ເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຜູ້ໄດ້ຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ;
2. ໂດຍບໍ່ມີພື້ນຖານຖືກຕ້ອງ;
3. ມີຜູ້ເສັຍຜົນປະໂຫຍດ;
4. ສາຍພົວພັນຂອງການໄດ້ ແລະ ການເສັຍ.

4.2.1. ຜູ້ໄດ້ຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ

ຜູ້ໄດ້ຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ ແມ່ນຜູ້ທີ່ໄດ້ຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດໂດຍບໍ່ມີພື້ນຖານທາງດ້ານກົດໝາຍ, ຊຶ່ງອາດຮູ້ ຫຼື ບໍ່ຮູ້ວ່າຕົນມີສິດໄດ້ຮັບຊັບດັ່ງກ່າວ ຫຼື ບໍ່.

ບຸກຄົນໃດໜຶ່ງທີ່ມີຊັບສົ່ງຂອງ ຫຼື ຜົນປະໂຫຍດ ເພີ່ມຂຶ້ນໂດຍບໍ່ມີພື້ນຖານຖືກຕ້ອງ ຊຶ່ງການເພີ່ມຂຶ້ນຂອງຊັບສົ່ງຂອງ ຫຼື ຜົນປະໂຫຍດນັ້ນ ຜູ້ກ່ຽວອາດຈະບໍ່ຮູ້ ຫຼື ເຂົ້າໃຈວ່າແມ່ນຊັບຂອງຕົນ. ການໄດ້ຊັບສົ່ງຂອງອາດຈະໄດ້ມາໂດຍມີບຸກຄົນອື່ນຫຼົງມອບໃຫ້ ຫຼື ໄດ້ມາດ້ວຍການຫຼົງຜິດ ຊຶ່ງການໄດ້ຊັບສົ່ງຂອງດັ່ງກ່າວເປັນສາເຫດເຮັດໃຫ້ຊັບສົ່ງຂອງ ຂອງຜູ້ທີ່ມີສິດຖືກຕ້ອງຕາມກົດໝາຍຫຼຸດລົງ ຫຼື ເສັຍຜົນປະໂຫຍດ. ການໄດ້ຮັບຊັບສົ່ງຂອງອາດລວມມີຊັບສົ່ງຂອງທີ່ເປັນວັດຖຸທີ່ມີຕົວຕົນ ຫຼື ຊັບສົ່ງຂອງທີ່ບໍ່ມີຕົວຕົນ ເຊັ່ນ ແຮງງານ, ລິຂະສິດ, ສິດໃນເຄື່ອງໝາຍການຄ້າ ແລະ ອື່ນໆ.

4.2.2. ໂດຍບໍ່ມີພື້ນຖານຖືກຕ້ອງ

ການຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດໂດຍບໍ່ມີພື້ນຖານຖືກຕ້ອງ ໝາຍເຖິງການໄດ້ຊັບສົ່ງຂອງ ຫຼື ຜົນປະໂຫຍດນັ້ນມາໂດຍບໍ່ມີເຫດຜົນ ຫຼື ບໍ່ມີສາເຫດຂອງການໄດ້ມານັ້ນ ເຊັ່ນ ບໍ່ມີສັນຍາຊື້ຂາຍ, ບໍ່ມີການມອບໃຫ້, ບໍ່ມີການສືບທອດມູນມໍຣະດົກ, ການເກັບຊັບສົ່ງຂອງທີ່ຕົກເຮ່ຍ ແລະ ອື່ນໆ.

ຕົວຢ່າງ: ກ ສົ່ງສິນຄ້າໃຫ້ **ຂ** ຕາມທີ່ຢູ່ທີ່ **ຂ** ໄດ້ແຈ້ງໄວ້ ແຕ່ປາກົດວ່າ **ຂ** ໄດ້ຍ້າຍອອກຈາກບ່ອນຢູ່ນັ້ນແລ້ວໂດຍບໍ່ໄດ້ແຈ້ງໃຫ້ **ກ** ຮູ້ ແລະ **ຄ** ຊຶ່ງເປັນຜູ້ມາຢູ່ໃໝ່ໄດ້ຮັບເອົາສິນຄ້າດັ່ງກ່າວໄວ້ໂດຍອ້າງວ່າຕົນເປັນ **ຂ** ໝາຍຄວາມວ່າ **ຄ** ບໍ່ມີພື້ນຖານຖືກຕ້ອງໃນການຮັບຊັບດັ່ງກ່າວ.

ກ ມີເຈົ້າໜີ້ 2 ຄົນ ຄື **ຂ** ແລະ **ຄ**. **ກ** ຕ້ອງໄດ້ໃຊ້ແທນໜີ້ສິນໃຫ້ **ຂ** ຈຳນວນ 8.000.000 ກີບ ແລະ ໃຊ້ໜີ້ໃຫ້ **ຄ** 10.000.000 ກີບ, ໃນມື້ຊຳລະໜີ້ **ກ** ຫຼົງໂອນເງິນໃຫ້ **ຂ** 10.000.000 ກີບ. ກໍລະນີນີ້ ຖືວ່າ **ຂ** ໄດ້ຮັບເງິນທີ່ຕົນບໍ່ມີພື້ນຖານຖືກຕ້ອງ 2.000.000 ກີບ ຊຶ່ງ **ຂ** ຕ້ອງໄດ້ສົ່ງຄືນເງິນ ໃຫ້ **ກ**.

4.2.3. ຜູ້ສູນເສັຍຊັບສິ່ງຂອງ ຫຼື ຜົນປະໂຫຍດ

ຜູ້ສູນເສັຍຊັບສິ່ງຂອງ ຫຼື ຜົນປະໂຫຍດ ແມ່ນຜູ້ທີ່ເປັນເຈົ້າຂອງຊັບສິ່ງຂອງທີ່ຖືກຕ້ອງ ຕາມກົດໝາຍ ຊຶ່ງອາດມອບຊັບສິ່ງຂອງ ຫຼື ຜົນປະໂຫຍດຂອງຕົນໃຫ້ຜູ້ອື່ນດ້ວຍຄວາມຫລົງຜິດ ຫຼື ຊັບສິ່ງ ຂອງນັ້ນໄປຢູ່ກັບບຸກຄົນອື່ນໂດຍເຫດການໃດໜຶ່ງ ຊຶ່ງເຮັດໃຫ້ຜູ້ເປັນເຈົ້າຂອງນັ້ນເສັຍຊັບສິ່ງຂອງ ຫຼື ຜົນ ປະໂຫຍດ.

ຕົວຢ່າງ: **ກ** ເປັນໜີ້ **ຂ** ຈຳນວນ 500.000 ກີບ ແລະ ໄດ້ບອກ **ຂ** ວ່າຈະອອກແຮງງານໃຊ້ ແທນໜີ້ ໂດຍການເຮັດອະນາໄມສວນໃຫ້ **ຂ**, ພາຍຫຼັງທີ່ **ກ** ອະນາໄມສວນແລ້ວ **ກ** ຈຶ່ງຮູ້ວ່າສວນທີ່ ຕົນອະນາໄມໄປແລ້ວນັ້ນບໍ່ແມ່ນສວນຂອງ **ຂ** ແຕ່ເປັນສວນຂອງ **ຄ**. ໃນກໍລະນີນີ້ **ກ** ໄດ້ອອກແຮງງານ ໃຊ້ແທນໜີ້ສິນໃຫ້ **ຄ** ແທນທີ່ຈະໃຊ້ແທນໜີ້ສິນໃຫ້ **ຂ**, ຖືວ່າ **ກ** ສ້າງປະໂຫຍດໃຫ້ຜູ້ອື່ນດ້ວຍຄວາມ ຫລົງຜິດ. **ຄ** ໄດ້ຮັບຜົນປະໂຫຍດຈາກການອະນາໄມສວນທີ່ຕົນບໍ່ໄດ້ຈ້າງ ຫຼື ໃຫ້ **ກ** ເຮັດ, ກໍລະນີນີ້ຖື ວ່າ **ຄ** ໄດ້ຮັບຜົນປະໂຫຍດໂດຍບໍ່ມີພື້ນຖານຖືກຕ້ອງ. ສະນັ້ນ, **ຄ** ຕ້ອງໄດ້ຕອບແທນຄ່າແຮງງານໃຫ້ **ກ**. ສ່ວນ **ກ** ຍັງມີໜີ້ ຕ້ອງສົ່ງໃຫ້ **ຂ** ຕາມສັນຍາກູ້ຢືມເບື້ອງຕົ້ນ.

ຂໍ້ສັງເກດຂອງນັກວິຊາການຈຳນວນໜຶ່ງເຫັນວ່າ ເງື່ອນໄຂຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີ ສິດ ມີຄຳເຫັນວ່າຄວນເພີ່ມເງື່ອນໄຂກ່ຽວກັບເຈດຕະນາ ຫຼື ຫຼົງຜິດໃສ່ ເນື່ອງຈາກວ່າຜົນສະທ້ອນທີ່ ເກີດຂຶ້ນຈາກການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດໂດຍເຈດຕະນາ ຫຼື ຫຼົງຜິດມີຄວາມແຕກຕ່າງກັນ. ພ້ອມ ດຽວກັນນີ້ ຖ້າອີງໃສ່ເງື່ອນໄຂລວມຂອງຄວາມຮັບຜິດຊອບທາງແພ່ງຈະມີ ຫຼັກການສະແດງເຈດຕະນາ ເຂົ້າມາກ່ຽວຂ້ອງ. ນັກວິຊາການຈຳນວນໜຶ່ງມີຄຳເຫັນວ່າ ສີ່ ເງື່ອນໄຂທີ່ກຳນົດໄວ້ຂ້າງເທິງນັ້ນ ມີຄວາມ ໝາຍຄົບຖ້ວນຕາມນິຍາມຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ, ສ່ວນເຈດຕະນາ ຫຼື ຫຼົງຜິດນັ້ນແມ່ນ ຜົນສະທ້ອນຂອງເລື່ອງດັ່ງກ່າວ.

4.2.4. ສາຍພົວພັນຂອງການໄດ້ ແລະ ການເສັຍ

ສາຍພົວພັນຂອງການໄດ້ ແລະ ການເສັຍ ໝາຍເຖິງສາຍພົວພັນໃນການຮຽກຮ້ອງເອົາຊັບສິ່ງ ຂອງ ຫຼື ຜົນປະໂຫຍດໃດໜຶ່ງຄືນ ລະຫວ່າງຜູ້ເສັຍ ກັບຜູ້ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດ ໂດຍບໍ່ມີ ພື້ນຖານຖືກຕ້ອງ ຊຶ່ງຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ເປັນເປົ້າໝາຍຂອງການຮຽກຮ້ອງດັ່ງກ່າວ ຕ້ອງ

ແມ່ນຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ສອດຄ່ອງລະຫວ່າງ ຜູ້ເສັຍກັບຜູ້ຮັບ ແລະ ຢູ່ໃນການຄອບຄອງ ໂດຍຜູ້ຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ.

ເຖິງຢ່າງໃດກໍຕາມ ຖ້າການໄດ້ຮັບຊັບສິ່ງຂອງໃດໜຶ່ງ ຫາກບໍ່ສາມາດກຳນົດສາຍພົວພັນລະຫວ່າງຝ່າຍທີ່ໄດ້ຮັບ ແລະ ຝ່າຍທີ່ເສັຍຊັບສິ່ງຂອງ ຫຼື ຜົນປະໂຫຍດນັ້ນ ກໍບໍ່ຖືວ່າເປັນການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ.

ຕົວຢ່າງ: ກ ເປັນໜີ້ **ຂ** ຈຳນວນ 500.000 ກີບ ແລະ ໄດ້ບອກ **ຂ** ວ່າຈະອອກແຮງງານໃຊ້ແທນໜີ້ ໂດຍການອະນາໄມສວນໃຫ້ **ຂ**, ພາຍຫຼັງທີ່ **ກ** ອະນາໄມສວນແລ້ວ **ກ** ຈຶ່ງຮູ້ວ່າສວນທີ່ຕົນອະນາໄມໄປແລ້ວນັ້ນບໍ່ແມ່ນສວນຂອງ **ຂ** ແຕ່ເປັນສວນຂອງ **ຄ**. ໃນກໍລະນີນີ້ **ກ** ໄດ້ອອກແຮງງານໃຊ້ແທນໜີ້ສິນໃຫ້ **ຄ** ແທນທີ່ຈະໃຊ້ແທນໜີ້ສິນໃຫ້ **ຂ**, ຖືວ່າ **ກ** ສ້າງປະ�โຫຍດໃຫ້ຜູ້ອື່ນດ້ວຍຄວາມຫລົງຜິດ. **ຄ** ໄດ້ຮັບຜົນປະໂຫຍດຈາກການອະນາໄມສວນທີ່ຕົນບໍ່ໄດ້ຈ້າງ ຫຼື ໃຫ້ **ກ** ເຮັດ, ກໍລະນີນີ້ຖືວ່າ **ຄ** ໄດ້ຮັບຜົນປະໂຫຍດໂດຍບໍ່ມີພື້ນຖານຖືກຕ້ອງ. ສະນັ້ນ, **ຄ** ຕ້ອງໄດ້ຕອບແທນຄ່າແຮງງານໃຫ້ **ກ**. ສ່ວນ **ກ** ຍັງມີໜີ້ ຕ້ອງສົ່ງໃຫ້ **ຂ** ຕາມສັນຍາກູ້ຍືມເບື້ອງຕົ້ນ. ເຫັນໄດ້ວ່າສາຍພົວພັນລະຫວ່າງ **ກ** ກັບ **ຄ** ຕໍ່ກັບການໄດ້-ການເສັຍຜົນປະໂຫຍດ ທີ່ຕົນບໍ່ມີສິດນັ້ນ ເກີດຈາກການອອກແຮງງານໃຊ້ແທນໜີ້ສິນຂອງ **ກ**.

4.3. ຜົນການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ

4.3.1. ຜົນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ ໂດຍເຈດຕະນາ

ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດໂດຍເຈດຕະນາ ໝາຍເຖິງຜູ້ທີ່ໄດ້ຮັບຊັບສິ່ງຂອງນັ້ນ ສັງເກດໄດ້ວ່າຊັບທີ່ຕົນຄອບຄອງຢູ່ນັ້ນແມ່ນເພີ່ມຂຶ້ນ ແລະ ໄດ້ມາໂດຍບໍ່ມີພື້ນຖານຖືກຕ້ອງ ແຕ່ກໍຍັງຮັບເອົາໄວ້ ເຊັ່ນ ສັດລ້ຽງຫຼົງຝູງ, ການເກັບຊັບສິ່ງຂອງທີ່ຕົກເຮັ່ຍ ບຸກຄົນທີ່ໄດ້ຮັບບໍ່ໄປແຈ້ງ ຫຼື ປະກາດຫາເຈົ້າຂອງ.

ຜົນສະທ້ອນຂອງການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດ ທີ່ຕົນບໍ່ມີສິດໂດຍເຈດຕະນາ ຜູ້ຮັບຊັບນັ້ນຕ້ອງໄດ້ສົ່ງຊັບສິ່ງຂອງທັງໝົດຄືນໃຫ້ຜູ້ເປັນເຈົ້າຂອງ ພ້ອມທັງໝາກຜົນ ແລະ ລາຍໄດ້ທີ່ໄດ້ຈາກຊັບດັ່ງກ່າວ ນັບແຕ່ມື້ທີ່ໄດ້ຮັບຊັບສິ່ງຂອງນັ້ນ. ໃນເວລາສົ່ງຊັບສິ່ງຂອງນັ້ນຄືນ, ຖ້າວ່າມູນຄ່າຂອງຊັບຫຼຸດລົງ ເມື່ອທຽບກັບມູນຄ່າໃນການຮັບຊັບສິ່ງຂອງເບື້ອງຕົ້ນ ຫຼື ມີການເຮັດໃຫ້ຊັບນັ້ນເປ່ເພ, ເສັຍຫາຍ ຫຼື ຖືກທຳລາຍ ຜູ້ທີ່ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດ ທີ່ຕົນບໍ່ມີສິດໂດຍເຈດຕະນານັ້ນ ຕ້ອງທົດ

ແທນຄືນມູນຄ່າຂອງຊັບສິ່ງຂອງ ຫຼື ຜົນປະໂຫຍດ. ໃນກໍລະນີທີ່ມີການປັບປຸງ, ເພີ່ມຕື່ມ, ປ່ຽນແປງ ຊັບດັ່ງກ່າວໃຫ້ດີຂຶ້ນ ຊັບນັ້ນກໍຈະຕົກເປັນຂອງເຈົ້າຂອງເດີມ ໂດຍບໍ່ມີການທົດແທນແຕ່ຢ່າງໃດ[22].

4.3.2. ຜົນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດ

ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດ ໝາຍເຖິງຜູ້ທີ່ໄດ້ຮັບຊັບສິ່ງຂອງນັ້ນບໍ່ຮູ້ ແລະ ບໍ່ອາດຮູ້ໄດ້ວ່າຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນຮັບມານັ້ນເປັນຂອງບຸກຄົນອື່ນ ເຊັ່ນ ການໄດ້ຮັບຊັບສິ່ງຂອງຈາກບຸກຄົນອື່ນຫຼົງມອບໃຫ້ຕົນ ຍ້ອນຜູ້ມອບຄິດວ່າຜູ່ກ່ຽວເປັນລູກໜີ້ ແລະ ຜູ້ຮັບກໍຫຼົງຮັບເອົາ. ການມອບເງິນໃຊ້ແທນໜີ້ສິນໃຫ້ເກີນຈຳນວນ, ບຸກຄົນໃດໜຶ່ງໂອນເງິນຜິດບັນຊີ ຊຶ່ງຕົນເອງກໍບໍ່ໄດ້ກວດກາ, ການຫຼົງເອົາຊັບສິ່ງຂອງ ຂອງບຸກຄົນອື່ນໄປນຳໃຊ້ໂດຍຄິດວ່າເປັນຂອງຕົນເອງ ເພາະຊັບດັ່ງກ່າວຄ້າຍຄືກັນ, ສັດຫຼົງຝູງມາຢູນຳກຸ່ມສັດຂອງຕົນໂດຍບໍ່ໄດ້ສັງເກດເບິ່ງ.

ຜົນສະທ້ອນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດຄື ຜູ້ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດ ກໍຕ້ອງໄດ້ສົ່ງຄືນແກ່ຜູ້ເປັນເຈົ້າຂອງເດີມ. ໃນເວລາສົ່ງຊັບສົ່ງຂອງຄືນນັ້ນ, ຖ້າວ່າມູນຄ່າຂອງຊັບຫາກຫຼຸດລົງ ເມື່ອທຽບກັບມູນຄ່າຂອງຊັບທີ່ຮັບໃນເບື້ອງຕົ້ນ ຫຼື ຊັບນັ້ນເປ່ເພ, ເສື່ອມຄຸນນະພາບຈາກການນຳໃຊ້. ກໍລະນີຜູ້ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດ ໄດ້ເອົາໄປຂາຍ ຫຼື ມອບໃຫ້ບຸກຄົນອື່ນ ກໍຕ້ອງສົ່ງຄືນຕາມມູນຄ່າຂອງຊັບນັ້ນ. ໃນກໍລະນີທີ່ມີການປັບປຸງ, ເພີ່ມເຕີ່ມ ຫຼື ໃຊ້ຈ່າຍ ເພື່ອປົກປັກຮັກສາໃຫ້ຊັບນັ້ນດີຂຶ້ນ ຜູ່ເປັນເຈົ້າຂອງຊັບຕ້ອງທົດແທນຄືນມູນຄ່າ ແລະ ຄ່າໃຊ້ຈ່າຍ ເພື່ອໃຫ້ມູນຄ່າ ຊັບເພີ່ມຂຶ້ນ ຫຼື ໃນການປົກປັກຮັກສາຊັບນັ້ນ. ສຳລັບໝາກຜົນ ແລະ ລາຍໄດ້ທີ່ໄດ້ຈາກຊັບທີ່ຕົນຄອບຄອງດ້ວຍຄວາມຫຼົງຜິດ ແມ່ນບໍ່ໄດ້ສົ່ງຄືນໃຫ້ເຈົ້າຂອງເດີມ[23].

4.3.3. ຜົນຂອງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດຈາກສັນຍາເປັນໂມຄະ ຫຼື ການຍົກເລີກສັນຍາ

ການສົ່ງຊັບສົ່ງຂອງທີ່ເກີດມາຈາກສັນຍາທີ່ເປັນໂມຄະ ຫຼື ການຍົກເລີກສັນຍາ, ທາງດ້ານທິດສະດີແລ້ວກໍເປັນກໍລະນີໜຶ່ງທີ່ເນື່ອງມາຈາກການຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດໂດຍບໍ່ມີພື້ນຖານຖືກຕ້ອງ.

ໃນກໍລະນີທີ່ສັນຍາເປັນໂມຄະ ຫຼື ມີການຍົກເລີກສັນຍາ, ສິ່ງທີ່ຄູ່ສັນຍາໄດ້ປະຕິບັດຕໍ່ກັນ, ໂດຍພື້ນຖານແລ້ວ ໃນເວລາທີ່ສັນຍາຍັງມີຜົນສັກສິດຢູ່ການຄອບຄອບຊັບສົ່ງຂອງ ຫຼື ຜົນປະໂຫຍດຂອງຝ່າຍໃດໜຶ່ງຂອງຄູ່ສັນຍາ ຖືວ່າມີພື້ນຖານຖືກຕ້ອງ ແຕ່ເມື່ອສັນຍາເປັນໂມຄະ ຫຼື ຖືກຍົກເລີກອາດເຮັດໃຫ້ການຄອບຄອງຊັບສົ່ງຂອງ ຫຼື ຜົນປະໂຫຍດຂອງຝ່າຍນັ້ນ ບໍ່ມີພື້ນຖານຖືກຕ້ອງ.

---

[22] ກົດໝາຍວ່າດ້ວຍກຳມະສິດ ປີ 1990, ມາດຕາ 61 ວັກ 2.

[23] ກົດໝາຍວ່າດ້ວຍກຳມະສິດ, ປີ 1990ມາດຕາ 60 ວັກ 2.

ອີງຕາມມາດຕາ 23 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາໄດ້ກຳນົດ ຜົນສະທ້ອນຂອງສັນຍາທີ່ເປັນໂມຄະ ຕາມແຕ່ລະກໍລະນີດັ່ງນີ້:

- ໃນກໍລະນີທີ່ສັນຍາເຮັດຂຶ້ນໂດຍບໍ່ສອດຄ່ອງກັບເງື່ອນໄຂຂອງສັນຍາ, ສັນຍາທີ່ເຮັດຂຶ້ນລະຫວ່າງເດັກທີ່ບໍ່ເຖິງກະສຽນອາຍຸ ຫຼື ຄົນບ້າເສັຍຈິດ, ສັນຍາທີ່ໄດ້ເຮັດຂຶ້ນໂດຍບຸກຄົນທີ່ຂາດສະຕິສຳນຶກ ຫຼື ຢູ່ໃນສະພາບມຶນເມົາອັນໜັກໜ່ວງ, ສັນຍາທີ່ໄດ້ເຮັດຂຶ້ນໂດຍຝ່າຍຫນຶ່ງໄດ້ຮັບຄວາມອັບປະໂຫຍດ, ໃຫ້ສິ່ງຊັບສິ່ງຂອງທີ່ໄດ້ປະຕິບັດຕໍ່ກັນແລ້ວນັ້ນ ຄືນແດ່ຄູ່ສັນຍາທັງສອງຝ່າຍ;
- ໃນກໍລະນີທີ່ສັນຍາຫາກໄດ້ເຮັດຂຶ້ນດ້ວຍການຕົວະຍົວະຫລອກລວງ ຫຼື ການບັງ ຄັບນາບຂູ່, ໃຫ້ສິ່ງຊັບສິ່ງຂອງທີ່ໄດ້ປະຕິບັດແລ້ວນັ້ນ ຄືນໃຫ້ຝ່າຍທີ່ໄດ້ຮັບຄວາມເສັຍຫາຍ ສ່ວນຊັບທີ່ໄດ້ປະຕິບັດ ຈາກອີກຝ່າຍໜຶ່ງນັ້ນໃຫ້ຮິບເປັນຂອງລັດ.

ເຫັນໄດ້ວ່າ, ໃນກໍລະນີທີ່ສັນຍາເປັນໂມຄະ, ຜູ້ທີ່ຄອບຄອງຊັບສິ່ງຂອງ ຫຼື ຜົນປະໂຫຍດ ຕ້ອງໄດ້ສິ່ງຊັບສິ່ງຂອງ ຫຼື ຜົນປະໂຫຍດນັ້ນຄືນໃຫ້ເຈົ້າຂອງຊັບເດີມ ຍ້ອນວ່າຕົນບໍ່ມີພື້ນຖານທີ່ຖືກຕ້ອງໃນການເອົາຊັບນັ້ນ ແລະ ເຮັດໃຫ້ເຈົ້າຂອງເດີມເສັຍຜົນປະໂຫຍດ ຫຼື ເສັຍຊັບ ຊຶ່ງເປັນການສອດຄ່ອງກັບ ມາດຕາ 99 ແລະ ມາດຕາ 100 ດັ່ງທີ່ໄດ້ອະທິບາຍມາຂ້າງເທິງນັ້ນ.

ໃນກໍລະນີທີ່ມີການຍົກເລີກສັນຍາ, ມາດຕາ 37 ຂອງກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ກຳນົດວ່າ ສິ່ງທີ່ໄດ້ປະຕິບັດຕໍ່ກັນຜ່ານມາກໍໃຫ້ແລ້ວກັນໄປ. ຖ້າວ່າຝ່າຍຫນຶ່ງ ຫາກໄດ້ປະຕິບັດພັນທະຂອງຕົນກ່ອນແລ້ວ ຝ່າຍທີ່ຍັງຄ້າງຄານັ້ນ ຕ້ອງໄດ້ປະຕິບັດຕອບແທນ. ສຳລັບພັນທະທີ່ຍັງບໍ່ທັນໄດ້ປະຕິບັດຕໍ່ກັນນັ້ນ ກໍໃຫ້ເລີກແລ້ວກັນໄປ.

ຄວາມຮູ້ພື້ນຖານກ່ຽວກັບຂໍ້ຜູກພັນນອກສັນຍາ ຫົວນີ້
ໄດຮັບການຊ່ວຍເຫຼືອ ທາງດ້ານວິຊາການ ແລະ
ການພິມ ຈາກ ອົງການຮ່ວມມືສາກົນປະເທດຍີ່ປຸ່ນ(ໄຈກາ)

ສຳລັບແຈກຢາຍ ຫ້າມ ຊື້ - ຂາຍ

ພິມຄັ້ງທີ1

10,000ຫົວ ທີ່ໂຮງພິມເທບປັນຍາ ນະຄອນຫຼວງວຽງຈັນ, ກໍລະກົດ 2014

JICA Project for Human Resource Development in the Legal sector
Tel: 021-254307 Fax: 021-254308

Japan International Cooperation Agency (JICA) Laos Office
Sihom Commerce Center, 3rd Floor
Souphanuvong Avenue, Building No. 006, Ban Sihom
P.O.Box 3933, Vientiane, Lao PDR
Tel: 021-241100 Fax: 021-241101